# ພາລະບົດແລະສິດອຳນາດຂອງ

# ວຸດທິສະພາໄທ

ສຳນັກພາສາຕ່າງປະເທດ

ສຳນັກງານເລຂາທິການວຸດທິສະພາ

# ພາລະບົດແລະສິດອຳນາດຂອງ

# ວຸດທິສະພາໄທ

ສຳນັກພາສາຕ່າງປະເທດ

# ຄຳນຳ

ສຳນັກງານເລຂາທິການວຸດທິສະພາຫຼືຫ້ອງວ່າການວຸດທິສະພາໄທ ແມ່ນເປັນອົງກອນທີ່ຊຸກຍູ້ ສະໜັບສະໜຸນ ແລະເສີມຂະຫຍາຍການເຮັດວຽກຂອງສະມາຊິກວຸດທິສະພາ ໄດ້ເຫັນວ່າການສ້າງຄວາມຮູ້ ຄວາມເຂົ້າໃຈ ຕໍ່ວຸດທິສະພາແລະລະບົບວຸດທິສະພາໄທ ຈະໄດ້ມີສ່ວນເສີມຂະຫຍາຍໃຫ້ສະຖາບັນນິຕິບັນຫຍັດໄທຍເຂັ້ມແຂ້ງ ເສີມຂະຫຍາຍຄວາມເຂົ້າໃຈອັນດີຂອງປະເທດອ້ອມຂ້າງຕໍ່ໄທໃຫ້ຫຼາຍຂຶ້ນ ຣວມທັ້ງ ຈະໄດ້ສະໜັບສະໜຸນໃຫ້ເກີດການສ້າງສາເຄືອຂ່າຍຜູ້ເຮັດວຽກທາງດ້ານນິຕິບັນຫຍັດໃຫ້ກວ້າງຂວາງອອກໄປ ເພື່ອພັດທະນາລະບອບປະຊາທິປະໄຕຮ່ວມກັນຂອງໄທກັບປະເທດເພື່ອນມິດ ກໍ່ຄື ສປປ ລາວ ໃຫ້ຮັດແໜ້ນຫຼາຍຂຶ້ນໃນທີ່ສຸດ

ຫວັງຢ່າງຍິ່ງວ່າປຶ້ມຫົວນີ້ຈະເປັນບ່ອນອີງ ແລະເປັນປະໂຫຍດ ບໍ່ຫຼາຍກໍ່ໜ້ອຍ ໃຫ້ພະນັກງານວິຊາການຂອງຫ້ອງວ່າການວຸດທິສະພາໄທ ພະນັກງານວິຊາການຂອງສະພາແຫ່ງຊາດແຫ່ງ ສປປ ລາວ ພະນັກງານວິຊາການຂອງລັດຖະບານ ສປປ ລາວ ແລະຄົນລາວ ກໍຄື ຜູ້ທີ່ມີຄວາມ ສົນໃຈ ໄດ້ສຶກສາຄົ້ນຄວ້າ ຮຽນຮູ້ ແລະນຳໃຊ້ ຢ່າງໃດກໍດີ ການຮຽບຮຽງປຶ້ມ ຄັ້ງນີ້ ບໍ່ອາດຈະຫລີກລ້ຽງຂໍ້ຂາດຕົກບົກຜ່ອງ ອັນເນື່ອງມາຈາກຂໍ້ມູນກ່ຽວກັບ ວຸດທິສະພາໄທທີ່ມີລັກສະນະກວ້າງຂວາງ ຊຶ່ງບົດຕ່າງໆ ໃນປຶ້ມຫົວນີ້ບໍ່ ສາມາດລົງເລິກຢ່າງລະອຽດ ແລະຄົບຖ້ວນໄດ້

ຫ້ອງວ່າການວຸດທິສະພາໄທ ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການ ປະກອບຄຳຄິດຄຳເຫັນ ຈາກພະນັກງານວິຊາການ ບັນດາຜູ້ອ່ານ ແລະ ນຳໃຊ້ເພື່ອຈະໄດ້ປັບປຸງໃຫ້ດີຂຶ້ນຕື່ມ

ຂໍສະແດງຄວາມຂອບໃຈມາຍັງທຸກໆ ທ່ານທີ່ໄດ້ເບິ່ງແລະໄດ້ອ່ານ ປຶ້ມຫົວນີ້ ແລະຂໍໃຫ້ **ມິດຕະພາບໄທ – ລາວ ວັດທະນາຖາວອນ ໝັ້ນຍືນ !**

ເມຖຸນ 2008

# ສາລະບານ

**ປະຫວັດຄວາມເປັນມາ**

**ປະກອບສ່ວນແລະການໄດ້ມາຂອງສະມາຊິກວຸດທິສະພາ**

ການເລືອກຕັ້ງສະມາຊິກວຸດທິສະພາ

ການສັນຫາສະມາຊິກວຸດທິສະພາ

**ອາຍຸການ**

**ຄຸນນະສມບັດແລະລັກສະໜະຫ້າມຜູ້ສະໝັກຮັບເລືອກຕັ້ງຫຼືເຂົ້າຮັບການສັນຫາເປັນສະມາຊິກວຸດທິສະພາ**

**ຂໍ້ຕ້ອງຫ້າມຂອງວຸດທິສະພາ**

**ການສິ້ນສຸດຕໍາແໜ່ງ**

**ເອກກະສິດແລະຄວາມຄຸ້ມຄອງ**

ເອກກະສິດ

ຄວາມຄຸ້ມຄອງ

**ປະທານແລະຮອງປະທານວຸດທິສະພາ**

ຈໍານວນ

ການຢູ່ໃນຕໍາແໜ່ງ

ການພົ້ນຈາກຕໍາແໜ່ງ

ອໍານາດໜ້າທີ່

**ສິດແລະອໍານາດຂອງວຸດທິສະພາ**

**1. ສິດແລະໜ້າທີ່ດ້ານນິຕິບັນຫຍັດ**

1.1 ການສ້າງພະລາດຊະບັນຫຍັດປະກອບລັດຖະທໍາມະນູນ

1.2 ການສ້າງພະລາດຊະບັນຫຍັດ

1.3 ການພິຈາລະນາຮ່າງພະລາດຊະບັນຫຍັດງົບປະມານຣາຍຈ່າຍ

1.4 ການພິຈາລະນາອະນຸມັດພະລາດຊະກໍາໜົດ

1.5 ການແກ້ໄຂເພີ່ມຕື່ມລັດຖະທໍາມະນູນ

**2. ສິດແລະອຳນາດດ້ານການຄວບຄຸມການບໍລິຫານລາດຊະການແຜ່ນດິນ**

2.1 ຮັບຮູ້ຄຳຖະແຫຼງນະໂຍບາຍຂອງຄະນະລັດຖະມົນຕີ

2.2 ການຕັ້ງກະທູ້ຖາມ

2.3 ການເປີດອະພິປາຍທົ່ວໄປ

2.4 ການຕັ້ງຄະນະກຳມາທິການ

**3. ສິດແລະອຳນາດໃນການໃຫ້ຄວາມເຫັນຊອບເລື່ອງສຳຄັນ**

3.1 ການໃຫ້ຄວາມເຫັນຊອບໃນການແຕ່ງຕັ້ງຜູ້ສຳເລັດລາດຊະການແທນເຈົ້າຊີວິດ

3.2 ການຮັບຮູ້ການແກ້ໄຂເພີ່ມຕື່ມກົດມົນທຽນບານວ່າດ້ວຍການສືບລາດຊະສັນຕິວົງ

3.3 ການຮັບຮູ້ຫຼືການຮັບຮອງເອົາການສືບຕໍ່ລາດຊະສົມບັດ

3.4 ການຮັບຮອງເອົາການປະກາດສົງຄາມ

3.5 ການຮັບຮອງເອົາໜັງສືສັນຍາ

3.6 ການເຫັນດີຮັບຮອງເອົາ ໃຫ້ພິຈາລະນາຮ່າງລັດຖະທຳມະນູນເພີ່ມຕື່ມ ຫຼື ຮ່າງພະລາດຊະບັນຫຍັດທີ່ລັດຖະສະພາຍັງສ້າງບໍ່ແລ້ວ ຍ້ອນສະພາຜູ້ແທນລາດສະດອນໝົດອາຍຸການຫຼືຖືກຍຸບ

3.7 ການຮັບຮອງໃຫ້ປິດສະໄໝກອງປະຊຸມກ່ອນຄົບກຳໜົດ 120 ມື້

**4. ສິດອຳນາດໃນການຮັບຮອງເອົາ ໃຫ້ຄຳແນະນຳ ຫຼືການເລືອກບຸກຄົນໃຫ້ເຂົ້າສູ່ຕຳແໜ່ງຕາມທີ່ກຳໜົດໄວ້ໃນລັດຖະທຳມະນູນ**

4.1 ການຮັບຮອງເອົາແລະຖະຫວາຍຄຳແນະນຳ

4.2 ການຮັບຮອງເອົາຮ່ວມກັບອົງກອນອື່ນ

4.3 ການພິຈາລະນາເລືອກ

**5. ສິດແລະອຳນາດຖອດຖອນບຸກຄົນອອກຈາກຕຳແໜ່ງ**

5.1 ເຫດແມ່ນໃຫ້ຖືກຖອດຖອນອອກຈາກຕຳແໜ່ງ

5.2 ຕຳແໜ່ງທີ່ແມ່ນອາດຖືກຖອດ

5.3 ຜູ້ມີສິດຍື່ນຄຳຮ້ອງໃຫ້ຖອດອອກ

5.4 ກະບວນການຖອດຖອນບຸກຄົນອອກຈາກຕຳແໜ່ງ

5.5 ຜົນຂອງການຖືກຖອດອອກຈາກຕຳແໜ່ງ

**6. ສິດແລະອຳນາດອື່ນ**

6.1 ການພິຈາລະນາເລື່ອງສຳຄັນ

6.2 ພາລະບົດຂອງວຸດທິສະພາໃນອົງການລັດຖະສະພາສາກົນ

# ວຸດທິສະພາໄທ

## ປະຫວັດຄວາມເປັນມາ

ລະບົບລັດຖະສະພາໄທແມ່ນພັດທະນາຂຶ້ນມາຈາກສະພາທີ່ປຶກສາລາດຊະການແຜ່ນດິນແລະອົງຄະມົນຕີສະພາ ໃນສະໄໝເຈົ້າຊີວິດລັດຊະການທີ່ 5 ຮອດເຈົ້າຊີວິດລັດຊະການທີ່ 7 ສະພາອົງຄະມົນຕີ ໄດ້ຖືກກຳໜົດໃຫ້ເປັນລັດຖະສະພາຝຶກຫັດເພື່ອກະກຽມຄວາມພ້ອມແລະເສີມຂະຫຍາຍຄວາມຮູ້ຄວາມເຂົ້າໃຈຕໍ່ລະບົບການປົກຄອງປະຊາທິປະໄຕ

ຕໍ່ມາເມື່ອໄທໄດ້ປ່ຽນແປງການປົກຄອງຈາກລະບອບສົມບູນອາຍາສິດ ເປັນລະບອບປະຊາທິປະໄຕທີ່ມີເຈົ້າຊີວິດເປັນປະມຸກໃນປີ 1942 ລັດຖະທຳມະນູນສະຫຍາມ ປີ 1942 ໄດ້ກຳໜົດໃຫ້ສະພາຜູ້ແທນລາດສະດົນຊຸດທຳອິດແມ່ນປະກອບສ່ວນຈາກສະມາຊິກ 2 ປະເພດ ຄື ປະເພດ 1 ມາຈາກການເລືອກຕັ້ງທາງອ້ອມ ປະເພດ 2 ມາຈາກການແຕ່ງຕັ້ງ ຮວມທັ້ງ ໄດ້ມີການແຕ່ງຕັ້ງບຸກຄົນຈາກສະພາອົງຄະມົນຕີສ່ວນໜຶ່ງເຂົ້າເປັນສະມາຊິກສະພາຜູ້ແທນລາດສະດອນປະເພດ 2 ດ້ວຍ ຈນຖຶງປີ 1946 ລັດຖະທຳມະນູນໄທຈຶ່ງໄດ້ມີການກຳໜົດໃຫ້ລັດຖະສະພາປະກອບສ່ວນຈາກສະພາຜູ້ແທນລາດສະດອນແລະພຶດຕະສະພາ

ໂດຍໃຫ້ ພຶດຕະສະພາ ມີທີ່ມາຈາກການເລືອກຕັ້ງທາງອ້ອມແລະແມ່ນໃຫ້ເຂົ້າມາເຮັດວຽກແທນສະມາຊິກສະພາຜູ້ແທນລາດສະດອນປະເພດ 2 –ເພື່ອຄອຍເປັນສະພາຍັບຍັ້ງຫຼືກັ່ນກອງວຽກຂອງສະພາຜູ້ແທນລາດສະດອນ

ລັດຖະທຳມະນູນ ປີ 1946 ປະກາດໃຊ້ໄດ້ປີດຽວກໍ່ຖືກລົບລ້າງແລະມີການປະກາດນຳໃຊ້ລັດຖະທຳມະນູນ (ຊົ່ວຄາວ ປີ 1947) ຂຶ້ນແທນ ແລະໄດ້ມີການປ່ຽນຊື່ຂອງພຶດຕະສະພາເປັນວຸດທິສະພາ ແລະໃຫ້ໄດ້ມາຈາກການແຕ່ງຕັ້ງ ເຮັດວຽກຕາງໜ້າສະພາຜູ້ແທນລາດສະດອນຈົນກວ່າປະຊາຊົນແລະສະມາຊິກສະພາຜູ້ແທນລາດສະດອນ ທີ່ມາຈາກການເລືອກຕັ້ງຈະມີຄວາມຮູ້ ຄວາມເຂົ້າໃຈ ແລະສາມາດເຮັດວຽກໄດ້ດ້ວຍເຈົ້າຕົນ

ວຸດທິສະພາແມ່ນໄດ້ພັດທະນາມາຕາມລຳດັບ ຕາມຂອງສິດອຳນາດ ໜ້າທີ່ ວຽກ ແລະສະພາບການຈາມທີ່ລັດຖະທຳມະນູນແຕ່ລະສະບັບກຳໜົດ ຈົນມາຮອດວຸດທິສະພາຊຸດນີ້ ຊຶ່ງສິດອຳນາດແມ່ນໄດ້ອີງໃສ່ລັດຖະທຳມະນູນປີ 2007

## ປະກອບສ່ວນແລະການໄດ້ມາຂອງສະມາຊິກວຸດທິສະພາ

ວຸດທິສະພາແມ່ນປະກອບສ່ວນຈາກສະມາຊິກ 150 ທ່ານ ມີສະມາຊິກ 2 ປະເພດ ດັ່ງນີ້

ສ່ວນທຳອິດ ແມ່ນສະມາຊິກວຸດທິສະພາທີ່ມາຈາກການເລືອກຕັ້ງໃນແຕ່ຈັງຫວັດ (ທຽບເທົ່າແຂວງ) ຈັງຫວັດລະ 1 ທ່ານ ຮວມທັງໝົດ ຈຳນວນ 76 ທ່ານ

ສ່ວນທີ່ສອງ ແມ່ນສະມາຊິກວຸດທິສະພາທີ່ມາຈາກການສັນຫາ ຈຳນວນ 74 ທ່ານ ໂດຍແມ່ນສັນຫາແລະຄັດເລືອກ ຈາກ ພາກສ່ວນວິຊາການ ພາກສ່ວນລັດ ພາກສ່ວນເອກະຊົນ ພາກສ່ວນວິຊາຊີບ ແລະພາກສ່ວນອື່ນ ໆ

ແຕ່ຫາກແມ່ນມີເຫດການໃດ ເຮັດໃຫ້ສະມາຊິກວຸດທິສະພາບໍ່ຄົບຈຳນວນ 150 ທ່ານ ແຕ່ມີຈຳນວນບໍ່ໜ້ອຍກວ່າ 95% ຂອງຈຳນວນສະມາຊິກວຸດທິສະພາທັງໝດ ໃຫ້ຖືວ່າ ວຸດທິສະພາແມ່ນປະກອບສ່ວນຈາກສະມາຊິກຈຳນວນຕາມກ່າວ ແຕ່ຕ້ອງໃຫ້ມີການເລືອກຕັ້ງຫຼືສັນຫາໃຫ້ໄດ້ສະມາຊິກຄົບ 150 ທ່ານໃນ 180 ມື້ ນັບແຕ່ມື້ທີ່ມີເຫດການດັ່ງກ່າວ ແລະໃຫ້ສະມາຊິກວຸດທິສະພາທີ່ເຂົ້າມານັ້ນຢູ່ໃນຕຳແໜ່ງເທົ່າອາຍຸການຂອງວຸດທິສະພາທີ່ເຫຼືອຢູ່

**ການເລືອກຕັ້ງສະມາຊິກວຸດທິສະພາ (ຈຳນວນ 76 ທ່ານ)**

ການເລືອກຕັ້ງສະມາຊິກວຸດທິສະພາໃຫ້ໃຊ້ເຂດຈັງຫວັດເປັນເຂດເລືອກຕັ້ງ ແລະໃຫ້ມີສະມາຊິກວຸດທິສະພາຈັງຫວັດລະ 1 ທ່ານ ໂດຍໃຫ້ຜູ້ມີສິດເລືອກຕັ້ງອອກສຽງລົງຄະແນນຜູ້ສະໝັກຮັບເລືອກຕັ້ງໄດ້ 1 ສຽງ ແລະໃຫ້ໃຊ້ວິທີອອກສຽງລົງຄະແນນໂດຍກົງແລະລັບ

**ການສັນຫາສະມາຊິກວຸດທິສະພາ (ຈຳນວນ 74 ທ່ານ)**

1. ປະທານສານລັດຖະທຳມະນູນ
2. ປະທານກຳມະການການເລືອກຕັ້ງ
3. ປະທານຜູ້ກວດກາແຜ່ນດິນ
4. ປະທານກຳມະການປ້ອງກັນແລະປາບປາມການທຸຈະຫຼິດແຫ່ງຊາດ
5. ປະທານກຳມະການກວດກາເງິນແຜ່ນດິນ
6. ຜູ້ພິພາກສາໃນສານຍຸດຕິທຳສູງສຸດ (ສານດີກາ) ທີ່ຢູ່ໃນຕຳແໜ່ງບໍ່ຕ່ຳກວ່າຜູ້ພິພາກສາສານຍຸດຕິທຳສູງສຸດ (ສານດີກາ) ທີ່ກອງປະຊຸມໃຫຍ່ສານຍຸດຕິທຳສູງສຸດ (ສານດີກາ) ມອບໝາຍ 1 ທ່ານ
7. ຕຸລາການໃນສານປົກຄອງສູງສຸດທີ່ກອງປະຊຸມໃຫຍ່ຕຸລາການໃນສານປົກຄອງສູງສຸດມອບໝາຍ 1 ທ່ານ

ໃຫ້ຄະນະກຳມະການສັນຫາສະມາຊິກວຸດທິສະພາ ແມ່ນເຮັດໜ້າທີ່ສັນຫາໃຫ້ແລ້ວໃນ 30 ມື້ ນັບແຕ່ມື້ທີ່ໄດ້ຮັບບັນຊີລາຍຊື່ຈາກຄະນະກຳມະການການເລືອກຕັ້ງ ແລ້ວແຈ້ງຜົນການສັນຫາໃຫ້ຄະນະກຳມະການການເລືອກຕັ້ງປະກາດຜູ້ໄດ້ຮັບການສັນຫາເປັນສະມາຊິກວຸດທິສະພາ

ໃຫ້ຄະນະກຳມະການສັນຫາສະມາຊິກວຸດທິສະພາດຳເນີນການສັນຫາບຸກຄົນທີ່ມີຄວາມເໝາະສົມ ຈາກຜູ້ທີ່ໄດ້ຮັບການສະເໜີຊື່ຈາກອົງການຕ່າງ ໆ ໃນພາກສ່ວນວິຊາການ ພາກສ່ວນລັດ ພາກສ່ວນເອກະຊົນ ພາກສ່ວນວິຊາຊີບ ແລະ ພາກອື່ນ ທີ່ເປັນປະໂຫຍດໃນການປະຕິບັດວຽກງານຕາມອຳນາດໜ້າທີ່ຂອງວຸດທິສະພາ ເປັນສະມາຊິກວຸດທິສະພາ ໃນການສັນຫາແມ່ນໃຫ້ອີງໃສ່ຄວາມຮູ້ ຄວາມຊຳນານ ຫຼືປະສົບການ ໂອກາດ ຫຼືຄວາມເທົ່າທຽມກັນທາງເພດ ສັດສ່ວນຂອງບຸກຄົນໃນແຕ່ລະພາກສ່ວນທີ່ເທົ່າ ໆ ກັນ ຮວມທັ້ງ ການໃຫ້ໂອກາດກັບຜູ້ຂາດໂອກາດໃນສັງຄົມ

## ອາຍຸການ

ອາຍຸການຂອງສະມາຊິກວຸດທິສະພາມີກຳໜົດ 6 ປີ ນັບແຕ່ມື້ເລືອກຕັ້ງຫຼືມື້ທີ່ຄະນະກຳມະການການເລືອກຕັ້ງປະກາດຜົນການສັນຫາ ແລະຈະຢູ່ໃນຕຳແໜ່ງ ຕິດຕໍ່ກັນເກີນກວ່າໜຶ່ງສະໄໝບໍ່ໄດ້ ແລະສະມາຊິກວຸດທິສະພາຊຶ່ງຄົບວາລະຈະຕ້ອງຢູ່ໃນຕຳແໜ່ງເພື່ອປະຕິບັດວຽກງານຕໍ່ໄປຈົນກວ່າຈະມີສະມາຊິກວຸດທິສະພາຊຸດໃໝ່

ໃນສະໄໝທຳອິດ ສະມາຊິກວຸດທິສະພາທີ່ມາຈາກການສັນຫາມີອາຍຸການ 3 ປີ ນັບແຕ່ມື້ເຣັດວຽກມື້ທຳອິດ ແລະບໍ່ໃຫ້ນຳຂໍ້ຫ້າມບໍ່ໃຫ້ຢູ່ໃນຕຳແໜ່ງຕິດຕໍ່ກັນຫຼາຍກວ່າໜຶ່ງສະໄໝມານຳໃຊ້

## ຄຸນນະສົມບັດແລະລັກສະໜະຫ້າມຜູ້ສະໝັກຮັບເລືອກຕັ້ງຫຼືເຂົ້າຮັບການສັນຫາເປັນສະມາຊິກວຸດທິສະພາ

ຜູ້ມີສິດສະໝັກຮັບເລືອກຕັ້ງຫຼືໄດ້ຮັບການສະເໜີຊື່ເພື່ອເຂົ້າຮັບການສັນຫາເປັນສະມາຊິກວຸດທິສະພາຕ້ອງມີຄຸນສົມບັດແລະບໍ່ມີລັກສະໜະຕ້ອງຫ້າມ ດັ່ງນີ້

1. ມີສັນຊາດໄທ ໂດຍການເກີດ

2. ມີອາຍຸບໍ່ຕ່ຳກວ່າ 40 ປີເຕັມ ໃນມື້ຮັບສະໝັກຮັບເລືອກຕັ້ງ ຫຼືມື້ທີ່ໄດ້ຮັບການສະເໜີຊື່

3. ສຳເລັດການສຶກສາບໍ່ຕ່ຳກວ່າປະລິນຍາຕີ ຫຼືທຽບເທົ່າ

4. ຜູ້ສະໝັກຮັບເລືອກຕັ້ງສະມາຊິກວຸດທິສະພາທີ່ມາຈາກການເລືອກຕັ້ງ ຕ້ອງມີລັກສະໜະຢ່າງໃດຢ່າງໜຶ່ງ ດັ່ງນີ້

1) ມີຊື່ຢູ່ໃນທະບຽນບ້ານໃນຈັງຫວັດທີ່ສະໝັກຮັບເລືອກຕັ້ງມາແລ້ວເປັນເວລາບໍ່ໜ້ອຍກວ່າ 5 ປີ ນັບຮອດມື້ສະໝັກຮັບເລືອກຕັ້ງ

2) ເປັນບຸກຄົນທີ່ເກີດໃນຈັງຫວັດທີ່ສະໝັກຮັບເລືອກຕັ້ງ

3) ເຄີຍສຶກສາໃນສະຖານສຶກສາ ທີ່ຕັ້ງຢູ່ໃນຈັງຫວັດທີ່ສະໝັກຮັບເລືອກຕັ້ງເປັນເວລາບໍ່ໜ້ອຍກວ່າ 5 ປີການສຶກສາ

4) ເຄີຍຮັບລາດຊະການ ຫຼືມີຊື່ຢູ່ໃນທະບຽນບ້ານໃນຈັງຫວັດທີ່ສະໝັກຮັບເລືອກຕັ້ງເປັນເວລາຕິດຕໍ່ກັນບໍ່ໜ້ອຍກວ່າ 5 ປີ

5. ບໍ່ເປັນພໍ່ແມ່ ຜົວເມຍ ຫຼືລູກຂອງຜູ້ຢູ່ໃນຕຳແໜ່ງສະມາຊິກສະພາຜູ້ແທນລາດສະດອນ ຫຼືຜູ້ຢູ່ໃນຕຳແໜ່ງທາງການເມືອງ

6. ບໍ່ເປັນສະມາຊິກ ຫຼືຜູ້ຢູ່ໃນຕໍາແໜ່ງໃນພັກການເມືອງ ຫຼືເຄີຍເປັນສະມາຊິກ ຫຼື ເຄີຍໄດ້ຕໍາແໜ່ງ ແລະພົ້ນຈາກການເປັນສະມາຊິກ ຫຼືການໄດ້ຕໍາແໜ່ງນັ້ນ ໃນພັກການເມືອງນັ້ນມາແລ້ວ ຢ່າງໜ້ອຍ 5 ປີ ນັບຮອດມື້ຮັບສະໝັກເລືອກຕັ້ງ ຫຼືມື້ທີ່ໄດ້ຮັບການສະເໜີຊື່

7. ບໍ່ເປັນສະມາຊິກສະພາຜູ້ແທນລາດສະດອນ ຫຼືເຄີຍເປັນສະມາຊິກສະພາຜູ້ແທນລາດສະດອນ ແຕ່ພົ້ນຕໍາແໜ່ງນັ້ນມາແລ້ວຢ່າງໜ້ອຍ 5 ປີ ນັບຮອດມື້ຮັບສະໝັກເລືອກຕັ້ງ ຫຼືມື້ທີ່ໄດ້ຮັບການສະເໜີຊື່

8. ເປັນຜູ້ຖືກຫ້າມບໍ່ໃຫ້ໃຊ້ສິດສະໝັກຮັບເລືອກຕັ້ງ ຍ້ອນວ່າເປັນບຸກຄົນຜູ້ມີລັກສະໜະ ດັ່ງຕໍ່ໄປນີ້

1) ຕິດຢາເສບຕິດໃຫ້ໂທດ

2) ເປັນບຸກຄົນລົ້ມລະລາຍ ຫຼືເຄີຍເປັນບຸກຄົນລົ້ມລະລາຍທຸດຈະຫຼິດ

3) ເປັນບຸກຄົນຜູ້ຖືກຫ້າມບໍ່ໃຫ້ມີສິດເລືອກຕັ້ງ

- ເປັນພະ ເນນ ຜູ້ເຂົ້າພິດ ຜູ້ອອກບວດ

- ຢູ່ໃນລະຫວ່າງຖືກຖອດສິດເລືອກຕັ້ງ

- ເປັນບ້າ ຫຼືຈິດເສຍບໍ່ສົມປະກອບ

4) ຖືກຄໍາພິພາກສາໃຫ້ຈໍາຄຸກ ຫຼືຖືກຄຸມຂັງໂດຍຄໍາສັ່ງຂອງສານ

5) ເຄີຍຖືກຄໍາພິພາກສາໃຫ້ຈໍາຄຸກ ແລະພົ້ນຄຸກມາຍັງບໍ່ເລີຍ 5 ປີ ໃນມື້ເລືອກຕັ້ງ ເວັ້ນແຕ່ເປັນຄວາມຜິດອັນໄດ້ເຮັດໂດຍປະມາດ ຫຼືຄວາມຜິດໂທດຂັ້ນເບົາ

6) ເຄີຍຖືກໃຫ້ ໄລ່ອອກ ປົດອອກ ຫຼືໃຫ້ອອກຈາກລາດຊະການ ໜ່ວຍງານຂອງລັດ ຫຼື ລັດວິສາຫະກິດ ຍ້ອນແມ່ນເຮັດທຸດຈະຫຼິດຕໍ່ໜ້າທີ່ ຫຼືວ່າເຮັດທຸດຈະຫຼິດແລະປະພຶດໃນທາງບໍ່ຄວນໃນງານລາດຊະການ

7) ເຄີຍຖືກຄໍາພິພາກສາ ຫຼືຄໍາສັ່ງຂອງສານໃຫ້ຊັບສິນຕົກເປັນຂອງແຜ່ນດິນ ຍ້ອນວ່າຮັ່ງມີຜິດປົກກະຕິ ຫຼືມີຊັບສິນເພີ່ມຂຶ້ນໄວກວ່າປົກກະຕິ

8) ເປັນຂ້າລາດຊະການທີ່ມີຕໍາແໜ່ງ ຫຼືເງິນເດືອນປະຈໍາ ຍົກເວັ້ນແຕ່ເປັນຂ້າລາດຊະການການເມືອງ

9) ເປັນສະມາຊິກສະພາທ້ອງຖິ່ນ ຫຼືຜູ້ບໍລິຫານສະພາທ້ອງຖິ່ນ

10) ເປັນພະນັກງານ ຫຼືລູກຈ້າງຂອງໜ່ວຍງານລາດຊະການ ໜ່ວຍງານຂອງລັດ ລັດວິສາຫະກິດ ຫຼືເປັນເຈົ້າໜ້າທີ່ອື່ນຂອງລັດ

11) ເປັນຕຸລາການສານລັດຖະທໍາມະນູນ ກໍາມະການການເລືອກຕັ້ງ ຜູ້ກວດກາແຜ່ນດິນ ກໍາມະການປ້ອງກັນແລະປາບປາມການທຸດຈະຫຼິດແຫ່ງ ຊາດ ກໍາມະການກວດເງິນແຜ່ນດິນ ຫຼື ກໍາມະການສິດທິມະນຸດຊົນແຫ່ງຊາດ

12) ຢູ່ລະຫວ່າງຖືກຫ້າມບໍ່ໃຫ້ໄດ້ຕໍາແໜ່ງທາງການເມືອງ

13) ເຄີຍຖືກວຸດທິສະພາມີມະຕິຖອດອອກຈາກຕໍາແໜ່ງ

9) ບໍ່ເປັນລັດຖະມົນຕີ ຫຼືຜູ້ຢູ່ໃນຕຳແໜ່ງທາງການເມືອງອື່ນອັນບໍ່ແມ່ນສະມາຊິກສະພາທ້ອງຖິ່ນ ຫຼືຜູ້ບໍລິຫານທ້ອງຖິ່ນ ຫຼືເຄີຍເປັນແຕ່ພົ້ນຈາກຕຳແໜ່ງນັ້ນມາແລ້ວຍັງບໍ່ເລຍ 5 ປີ

## ຂໍ້ຕ້ອງຫ້າມຂອງວຸດທິສະພາ

1. ສະມາຊິກວຸດທິສະພາຈະເປັນລັດຖະມົນຕີຢູ່ໃນຕຳແໜ່ງທາງການເມືອງອື່ນ ຫຼືຢູ່ໃນຕຳແໜ່ງໃນອົງກອນອິດສະຫຼະຕາມລັດຖະທຳມະນູນບໍ່ໄດ້ ແລະຜູ້ເຄີຍເປັນສະມາຊິກວຸດທິສະພາແລ້ວໝົດອາຍຸ ການມາແລ້ວບໍ່ເລີຍ 2 ປີ ຈະເປັນລັດຖະມົນຕີ ຫຼືຜູ້ຢູ່ໃນຕຳແໜ່ງທາງການເມືອງບໍ່ໄດ້

2. ສະມາຊິກວຸດທິສະພາຕ້ອງບໍ່ຢູ່ໃນຕຳແໜ່ງ ຫຼືເຮັດວຽກໃນໜ່ວຍງານລາດຊະການ ໜ່ວຍງານລັດ ຫຼືລັດຖະວິສາຫະກິດ ຫຼືສະມາຊິກສະພາທ້ອງຖິ່ນ ຫຼືຂ້າລາດຊະການສ່ວນທ້ອງຖິ່ນ

3. ສະມາຊິກວຸດທິສະພາ ຜົວ/ເມຍ ລູກ ແລະຜູ້ທີ່ຖືກໃຊ້ໃຫ້ເຮັດໃນຖານະຜູ້ຖືກໃຊ້ ຜູ້ຮ່ວມເຮັດ ແລະຜູ້ຖືກມອບໝາຍຈາກສະມາຊິກວຸດທິສະພາ ຕ້ອງບໍ່ຮັບຫຼືແຊກແຊງ ຫຼືກ້າວກ່າຍການເຂົ້າຮັບ ສຳປະທານຈາກລັດ ໜ່ວຍງານລາດຊະການ ໜ່ວຍງານຂອງລັດ ຫຼືລັດຖະວິສາຫະກິດ ທີ່ເປັນການ ຜູກຂາດ ຕັດຕອນ ຫຼືເປັນຫຸ້ນສ່ວນຫຼືມີຫຸ້ນສ່ວນຫຼືບໍລິສັດທີ່ຮັບສຳປະທານ ຫຼືເປັນຄູ່ສັນຍາລັກສະໜະ ຕາມກ່າວ ບໍ່ວ່າໂດຍກົງຫຼືອ້ອມ

4. ສະມາຊິກວຸດທິສະພາ ຜົວ/ເມຍ ລູກ ແລະຜູ້ທີ່ຖືກໃຊ້ໃຫ້ເຮັດໃນຖານະຜູ້ຖືກໃຊ້ ຜູ້ຮ່ວມເຮັດ ແລະຜູ້ຖືກມອບໝາຍຈາກສະມາຊິກວຸດທິສະພາຕ້ອງບໍ່ຮັບເງິນຫຼືປະໂຫຍດຈາກ ລັດ ໜ່ວຍງານລາດຊະການ ໜ່ວຍງານຂອງລັດ ຫຼືລັດຖະວິສາຫະກິດເປັນພິເສດ ນອກເໜືອຈາກທີ່ ໜ່ວຍງານນັ້ນປະຕິບັດຕໍ່ຜູ້ອື່ນໃນວຽກງານປະຈຳວັນ (Routine)

5. ສະມາຊິກວຸດທິສະພາ ຜົວ/ເມຍ ລູກ ແລະຜູ້ທີ່ຖືກໃຊ້ໃຫ້ເຮັດໃນຖານະຜູ້ຖືກໃຊ້ ຜູ້ຮ່ວມເຮັດ ແລະຜູ້ຖືກມອບໝາຍຈາກສະມາຊິກວຸດທິສະພາ ຈະເປັນເຈົ້າຂອງຫຼືມີຫຸ້ນສ່ວນໃນກິດຈະການໜັງສືພິມ ວິດທະຍຸກະຈາຍສຽງແລະໂທລະພາບ ຫຼືໂທລະສັບບໍ່ໄດ້ ບໍ່ວ່າເປັນເຈົ້າຂອງໂດຍກົງຫຼືໃຫ້ຜູ້ອື່ນເຮັດແທນ ບໍ່ວ່າໂດຍກົງຫຼືໂດຍອ້ອມ

6. ສະມາຊິກວຸດທິສະພາຕ້ອງບໍ່ໃຊ້ຕຳແໜ່ງໄປກ້າວກ່າຍຫຼືແຊກແຊງຫາຜົນປະໂຫຍດເຂົ້າເຈົ້າຂອງ ຜູ້ອື່ນ ຫຼືນັກການເມືອງ ບໍ່ວ່າທາງກົງ ຫຼືທາງອ້ອມ ໃນເລື່ອງ ດັ່ງນີ້

1) ການປະຕິບັດລາດຊະການຫຼືເຮັດວຽກໃນໜ້າທີ່ປະຈຳຂອງຂ້າລາດຊະການ ພະນັກງານ ຫຼືລູກຈ້າງຂອງລັດ ໜ່ວຍງານລາດຊະການ ໜ່ວຍງານຂອງລັດ ຫຼືລັດຖະວິສາຫະກິດ ກິດຈະການທີ່ລັດເປັນເຈົ້າຂອງເປັນສ່ວນຫຼາຍ ຫຼືໜ່ວຍງານລາດຊະການສ່ວນທ້ອງຖິ່ນ

2) ການຮັບເຂົ້າຕຳແໜ່ງ ແຕ່ງຕັ້ງ ໂຍກຍ້າຍ ໂອນ ເລື່ອນຕຳແໜ່ງ ແລະເລື່ອນເງິນເດືອນຂອງຂ້າລາດຊະການ ຊຶ່ງມີຕຳແໜ່ງຫຼືເງິນເດືອນປະຈຳທີ່ບໍ່ແມ່ນຂ້າລາດຊະການການເມືອງພະນັກງານ ຫຼືລູກຈ້າງຂອງລັດ ໜ່ວຍງານລາດຊະການ ໜ່ວຍງານຂອງລັດ ຫຼືລັດຖະວິສາຫະກິດ ກິດຈະການທີ່ລັດເປັນເຈົ້າຂອງເປັນສ່ວນຫຼາຍ ຫຼືໜ່ວຍງານລາດຊະການສ່ວນທ້ອງຖິ່ນ

3) ການໃຫ້ຂ້າລາດຊະການ ພະນັກງານ ຫຼືລູກຈ້າງຂອງ ລັດ ໜ່ວຍງານລາດຊະການ ໜ່ວຍງານຂອງລັດ ຫຼືລັດຖະວິສາຫະກິດ ກິດຈະການທີ່ລັດເປັນເຈົ້າຂອງເປັນສ່ວນຫຼາຍ ຫຼືໜ່ວຍງານລາດຊະການສ່ວນທ້ອງຖິ່ນ ພົ້ນຈາກຕຳແໜ່ງ

## ການສິ້ນສຸດຕຳແໜ່ງ

1) ອອກຕາມອາຍຸການ

2) ຕາຍ

3) ລາອອກ

4) ຂາດຄຸນສົມບັດ ຫຼືມີລັກສະໜະຕ້ອງຫ້າມ

5) ເຮັດຂໍ້ຫ້າມ

6) ວຸດທິສະພາມີມະຕິໃຫ້ຖອດອອກຈາກຕຳແໜ່ງຫຼືສານລັດຖະທຳມະນູນມີຄຳຕັດສິນໃຫ້ພົ້ນຈາກຕຳແໜ່ງ ຫຼືຖືກຄຳສັ່ງສານສູງສຸດ (ສານດີກາ) ຕາມກ່າວນີ້ ໃຫ້ຖືວ່າສິ້ນສຸດຕຳແໜ່ງນັບແຕ່ມື້ທີ່ວຸດທິສະພາມີມະຕິ ຫຼືສານມີຄຳວິນິດໄສ ຫຼືຄຳສັ່ງ

7) ຂາດປະຊຸມເກີນກວ່າຈຳນວນ 1 ໃນ 4 ຂອງຈຳນວນມື້ປະຊຸມໃນສະໄໝ ກອງປະຊຸມທີ່ມີກຳໜດເວລາຢ່າງໜ້ອຍ 120 ມື້ ໂດຍບໍ່ໄດ້ຮັບອະນຸຍາດຈາກປະທານວຸດທິສະພາ

8) ຖືກຄຳພິພາກສາທີ່ສຸດແລ້ວໃຫ້ຈຳຄຸກ ແມ້ວ່າຈະເປັນການລໍລົງໂທດ ເວັ້ນແຕ່ຄວາມຜິດອັນໄດ້ເຮັດໂດຍປະມາດ ຄວາມຜິດໂທດຂັ້ນເບົາ ຫຼືຄວາມຜິດຖານ ໝິ່ນປະມາດ

## ເອກກະສິດແລະຄວາມຄຸ້ມຄອງ

### ເອກກະສິດ

ໃນກອງປະຊຸມວຸດທິສະພາ ສະມາຊິກຈະເວົ້າກະແຫຼງ ສະແດງຄວາມຄິດເຫັນ ຫຼືອອກສຽງລົງຄະແນນ ໃຫ້ຖືເປັນເອກກະສິດສະເພາະ ຜູ້ໃດຈະຍົກເອົາໄປເປັນເຫດຟ້ອງໂຈດບໍ່ໄດ້

ເອກກະສິດນີ້ ບໍ່ຄຸ້ມຄອງສະມາຊິກຜູ້ກ່າວຄຳເວົ້າໃນກອງປະຊຸມທີ່ມີການຖ່າຍທອດສດທາງວິດທະຍຸກະຈາຍສຽງ ຫຼືໂທລະພາບ ຫາກຄຳເວົ້າທີ່ກ່າວໃນກອງປະຊຸມໄປເຜີຍແຜ່ນອກບໍລະເວນລັດຖະສະພາແລະການກ່າວຄຳເວົ້ານັ້ນມີລັກສະໜະເປັນຄວາມຜິດອາຍາ ຫຼືລະເມີດສິດທາງແພ່ງຕໍ່ຜູ້ອື່ນທີ່ບໍ່ແມ່ນລັດຖະມົນຕີ ຫຼືສະມາຊິກວຸດທິສະພາໄດ້ຮັບຄວາມເສຍຫາຍ ປະທານວຸດທິສະພາຕ້ອງຈັດໃຫ້ມີການໂຄສະນາຄຳຊີ້ແຈງຕາມທີ່ຜູ້ເສຍຫາຍຮ້ອງຂໍຕາມວິທີການແລະໃນໄລຍະເວລາຕາມທີ່ຂໍ້ບັງຄັບກອງປະຊຸມວຸດທິສະພາກຳໜົດ ນອກຈາກນີ້ ຜູ້ເສຍຫາຍຍັງມີສິດຟ້ອງຄະດີຕໍ່ສານໄດ້

ເອກກະສິດນີ້ໃຫ້ຄຸ້ມຄອງຮອດຜູ້ພິມແລະຜູ້ໂຄສະນາຣາຍງານກອງປະຊຸມຕາມຂໍ້ບັງຄັບ ກອງປະຊຸມວຸດທິສະພາ ບຸກຄົນທີ່ປະທານກອງປະຊຸມອະນຸຍາດໃຫ້ເວົ້າກະແຫລງ ຫຼືສະແດງຄວາມຄິດເຫັນໃນກອງປະຊຸມ ຮວມທັ້ງ ຜູ້ເຮັດວຽກຖ່າຍທອດກອງປະຊຸມວຸດທິສະພາທາງວິດທະຍຸກະຈາຍສຽງ ຫຼືໂທລະພາບທີ່ໄດ້ຮັບອະນຸຍາດຈາກປະທານວຸດທິສະພາ

**ຄວາມຄຸ້ມກັນ**

ໃນລະຫວ່າງເປີດສະໄໝກອງປະຊຸມ ຫ້າມບໍ່ໃຫ້ຈັບ ຄຸມຂັງ ຫຼືຮຽກຕົວສະມາຊິກວຸດທິສະພາໄປໃນການເປັນຜູ້ຕ້ອງຫາໃນຄະດີອາຍາ ເວັ້ນແຕ່ໄດ້ຮັບອະນຸຍາດຈາກວຸດທິສະພາຫຼືເຮັດຄວາມຜິດຕໍ່ໜ້າ

ຫາກແມ່ນສະມາຊິກວຸດທິສະພາເຮັດຄວາມຜິດຕໍ່ຫໜ້າ ໃຫ້ຣາຍງານປະທານວຸດທິສະພາທັນທີ ແລະປະທານວຸດທິສະພາອາດສັ່ງໃຫ້ປ່ອຍຜູ້ຖືກຈັບກໍ່ໄດ້

ຫາກແມ່ນມີການຟ້ອງຄະດີອາຍາສະມາຊິກວຸດທິສະພາ ບໍ່ວ່າຟ້ອງນອກຫຼືໃນການເປີດສະໄໝກອງປະຊຸມ ສານຈະພິຈາລະນາຄະດີນັ້ນໃນລະຫວ່າງເປີດສະໄໝກອງປະຊຸມບໍ່ໄດ້ ເວັ້ນແຕ່ໄດ້ຮັບອະນຸຍາດຈາກວຸດທິສະພາ ຫຼືຄະດີອັນກ່ຽວກັບກົດໝາຍວ່າດ້ວນຍການເລືອກຕັ້ງສະມາຊິກສະພາຜູ້ແທນລາດສະດອນແລະການໄດ້ມາຂອງສະມາຊິກວຸດທິສະພາ ກົດໝາຍວ່າດ້ວຍຄະນະກຳມະການການເລືອກຕັ້ງ ຫຼືກົດໝາຍວ່າດ້ວຍພັກການເມືອງ ແຕ່ການພິຈາລະນາຄະດີຕ້ອງບໍ່ເປັນການຂັດຂວາງທີ່ສະມາຊິກຜູ້ນັ້ນຈະເຂົ້າຮ່ວມກອງປະຊຸມວຸດທິສະພາ

ຫາກສະມາຊິກວຸດທິສະພາໄດ້ຖືກຄຸມຂັງ ໃນລະຫວ່າງສອບສວນຫຼືພິຈາລະນາຄະດີຢູ່ກ່ອນເປີດ ສະໄໝກອງປະຊຸມ ເມື່ອຖືງມື້ເປີດສະໄໝປະຊຸມແລ້ວ ພະນັກງານສອບສວນຫຼືສານແມ່ນຕ້ອງປ່ອຍຕົວທັນທີຫາກປະທານວຸດທິສະພາໄດ້ຮ້ອງຂໍ ໂດຍຄຳສັ່ງປ່ອຍນັ້ນໃຫ້ມີຜົນນັບແຕ່ມື້ສັ່ງປ່ອຍຈນຮອດມື້ສຸດທ້າຍໃນສະໄໝກອງປະຊຸມນັ້ນ

## ປະທານແລະຮອງປະທານວຸດທິສະພາ

**ຈຳນວນ**

ອີງໃສ່ລັດຖະທຳມະນູນປີ 2008 ວຸດທິສະພາມີປະທານ 1 ທ່ານ ຮອງປະທານ 1 ຫຼື 2 ທ່ານກໍ່ໄດ້ ໂດຍເຈົ້າຊີວິດແຕ່ງຕັ້ງຈາກສະມາຊິກວຸດທິສະພາຕາມມະຕິຂອງວຸດທິສະພາ

**ການຢູ່ໃນຕຳແໜ່ງ**

ປະທານວຸດທິສະພາແລະຮອງປະທານວຸດທິສະພາ ຢູ່ໃນຕຳແໜ່ງຈົນຮອດມື້ເລືອກປະທານວຸດທິສະພາແລະຮອງປະທານວຸດທິສະພາໃໝ່

**ການພົ້ນຈາກຕຳແໜ່ງ**

ປະທານແລະຮອງປະທານວຸດທິສະພາພົ້ນຈາກຕຳແໜ່ງກ່ອນໝົດອາຍຸການຫາກວ່າ

1. ຄວາມເປັນສະມາຊິກວຸດທິສະພາສິ້ນສຸດ

2. ລາອອກຈາກຕຳແໜ່ງ

3. ເປັນນາຍົກລັດຖະມົນຕີ ລັດຖະມົນຕີ ຫຼືຂ້າລາດຊະການການເມືອງອື່ນ

4. ຖືກຕັດສິນໃຫ້ຈຳຄຸກ ບໍ່ວ່າຄະດີຍັງບໍ່ເຖິງທີ່ສຸດ ຫຼືລໍຖ້າການລົງໂທດຢູ່ ຍົກເວັ້ນແຕ່ເປັນຄວາມຜິດອັນໄດ້ເຮັດໂດຍປະໝາດ ຄວາມຜິດຖານເບົາ (ລະຫຸໂທດ) ຫຼືຄວາມຜິດຖານໝິ່ນປະໝາດ

## ອຳນາດໜ້າທີ່

ປະທານວຸດທິສະພາມີສິດແລະອຳນາດເຮັດວຽກຂອງວຸດທິສະພາ ໃຫ້ເປັນໄປຕາມຊໍ້ບັງຄັບ ສ່ວນຮອງປະທານວຸດທິສະພາມີສິດແລະອຳນາດຕາມທີ່ປະທານວຸດທິສະພາມອບໝາຍໃຫ້ ຮວມທັ້ງເຮັດວຽກແທນປະທານວຸດທິສະພາ ຫາກແມ່ນປະທານວຸດທິສະພາບໍ່ຢູ່ຫຼືບໍ່ສາມາດປະຕິບັດໜ້າທີ່ໄດ້

ປະທານວຸດທິສະພາແລະຜູ້ເຮັດວຽກແທນຕ້ອງວາງຕົວເປັນກາງ ບໍ່ເຂົ້າຂ້າງຝ່າຍໃດ

## ສິດແລະອຳນາດຂອງວຸດທິສະພາ

ອີງໃສ່ລັດຖະທຳມະນູນ ປີ 2008 ສິດແລະອຳນາດຂອງວຸດທິສະພາແບ່ງອອກເປັນ 6 ດ້ານ ຄື

1. ດ້ານນິຕິບັນຫຍັດ
2. ດ້ານການຄວບຄຸມການບໍລິຫານລາດຊະການແຜ່ນດິນ
3. ດ້ານການໃຫ້ຄວາມເຫັນຊອບເຣື່ອງສຳຄັນຂອງປະເທດ
4. ດ້ານການໃຫ້ຄວາມເຫັນຊອບ ໃຫ້ຄຳແນະນຳ ຫຼືການເລືອກໃຫ້ບຸກຄົນເຂົ້າຕຳແໜ່ງ
5. ດ້ານການຖອດຖອນບຸກຄົນອອກຈາກຕຳແໜ່ງ
6. ສິດແລະອຳນາດອື່ນຂອງວຸດທິສະພາ

# 1. ສິດແລະໜ້າທີ່ດ້ານນິຕິບັນຫຍັດ

## 1.1 ການສ້າງພະລາດຊະບັນຫຍັດປະກອບລັດຖະທຳມະນູນ

**1.1.1 ພະລາດຊະບັນຫຍັດປະກອບລັດຖະທຳມະນູນ ມີ 9 ສະບັບ** ດັ່ງນີ້

1) ພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍການເລືອກຕັ້ງສະມາຊິກສະພາຜູ້ແທນລາດສະດອນ

2) ພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍຄະນະກຳມະການການເລືອກຕັ້ງ

3) ພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍພັກການເມືອງ

4) ພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍການອອກສຽງປະຊາມະຕິ

5) ພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍວິທີການພິຈາລະນາຂອງສານລັດຖະທຳມະນູນ

6) ພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍວິທີການພິຈາລະນາຄະດີອາຍາຂອງຜູ້ຢູ່ໃນຕຳແໜ່ງທາງການເມືອງ

7) ພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍຜູ້ກວດກາແຜ່ນດິນ

8) ພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍການປ້ອງກັນແລະປາບປາມການທຸຈະຫຼິດ

9) ພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍການກວດເງິນແຜ່ນດິນ

**1.1.2 ການສະເໜີຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນ**

ຜູ້ມີສິດສະເໜີສ້າງ

1) ຄະນະລັດຖະມົນຕີ

2) ສະມຊິກສະພາຜູ້ແທນລາດສະດອນຈຳນວນບໍ່ໜ້ອຍກວ່າ 1 ໃນ 10 ຂອງຈຳນວນສະມາຊິກທັ້ງໝົດທີ່ມີຢູ່ ຫຼືສະມາຊິກສະພາຜູ້ແທນລາດສະດອນແລະສະມາຊິກວຸດທິສະພາຈຳນວນບໍ່ໜ້ອຍກວ່າ 1 ໃນ 10 ຂອງຈຳນວນສະມາຊິກທັ້ງໝົດທີ່ມີຢູ່ຂອງທັ້ງ 2 ສະພາ

3) ສານລັດຖະທຳມະນູນ ສານຍຸດຕິທຳສູງສຸດ (ສານດີກາ) ຫຼືອົງກອນອິດສະຫຼະຕາມລັດຖະທຳມະນູນ ຊຶ່ງປະທານສານຫຼືປະທານອົງກອນນັ້ນເປັນຜູ້ຮັກສາກວດກາການປະຕິບັດຕາມກົດໝາຍນັ້ນ

**1.1.3 ການພິຈາລະນາຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນ**

ການພິຈາລະນາຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນຂອງທັ້ງສະພາຜູ້ແທນລາດສະດອນແລະວຸດທິສະພາຈະແບ່ງອອກເປັນ 3 ຂັ້ນ ໂດຍການອອກສຽງໃນຂັ້ນທີ່ 1 ແມ່ນຂັ້ນຮັບຫຼັກການ ແລະຂັ້ນທີ່ 2 ແມ່ນຂັ້ນການ

ພິຈາລະນາຮຽງຕາມມາດຕາ ທັງ 2 ຂັ້ນຕອນນີ້ແມ່ນອີງໃສ່ສຽງຫຼາຍໃນກອງປະຊຸມ ສ່ວນການອອກສຽງໃນຂັ້ນທີ່ 3 ແມ່ນຂັ້ນມີມະຕິໃຫ້ອອກນຳໃຊ້ມີຜົນສັກສິດ ໂດຍອີງໃສ່ສຽງສ່ວນຫລາຍຂອງຈຳນວນສະມາຊິກທັງໝົດທີ່ມີຢູ່ຂອງທັງ 2 ສະພາ

**1.1.4 ການກວດກາຄວາມສອດຄ່ອງກັບລັດຖະທຳມະນູນກ່ອນມີຜົນສັກສິດໂດຍສານລັດຖະທຳມະນູນ**

ເມື່ອລັດຖະສະພາໃຫ້ຄວາມເຫັນຊອບກັບຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນແລ້ວ ກ່ອນນຳໃຫ້ເຈົ້າຊີວິດລົງຊື່ປະກາດນຳໃຊ້ ໃຫ້ສົ່ງສານລັດຖະທຳມະນູນພິຈາລະນາຄວາມສອດຄ່ອງກັບລັດຖະທຳມະນູນ ຊຶ່ງຕ້ອງກວດກາໃຫ້ແລ້ວພາຍໃນ 30 ມື້ ນັບແຕ່ມື້ໄດ້ຮັບເລື່ອງ

ຫາກສານລັດຖະທຳມະນູນເຫັນວ່າຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນນັ້ນມີຂໍ້ຄວາມຂັດຫຼືແຍ້ງຕໍ່ລັດຖະທຳມະນູນ ໃຫ້ຂໍ້ຄວາມຂັດຫຼືແຍ້ງນັ້ນຕ້ອງຕົກໄປ ແຕ່ຫາກແມ່ນສາລະສຳຄັນ ຂັດຫຼືແຍ້ງ ຫຼືຂັ້ນຕອນການສ້າງບໍ່ຖືກຕ້ອງຕາມລັດຖະທຳມະນູນ ໃຫ້ຮ່າງກົດໝາຍນັ້ນເປັນອັນຕົກໄປ

ຫາກຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນຕ້ອງຕົກໄປຍ້ອນວ່າສານລັດຖະທຳມະນູນນັ້ນກັບຄືນໃຫ້ສະພາຜູ້ແທນລາດສະດອນແລະວຸດທິສະພາພິຈາລະນາຕາມລຳດັບ ຫາກໄດ້ແກ້ໄຂເພີ່ມຕື່ມຂໍ້ຄວາມບໍ່ໃຫ້ຂັດຫຼືແຍ້ງຕໍ່ລັດຖະທຳມະນູນແລ້ວໃຫ້ມີມະຕິຮັບຮອງເອົາໄດ້ ໂດຍອີງໃສ່ ສຽງສ່ວນຫລາຍຂອງຈຳນວນສະມາຊິກທັງໝົດເທົ່າທີ່ມີຢູ່ຂອງແຕ່ລະສະພາ

## 1.2 ການສ້າງພະລາດຊະບັນຫຍັດ

**1.2.1 ການສະເໜີຮ່າງພະລາດຊະບັນຫຍັດ**

ຜູ້ມີສິດສະເໜີສ້າງກົດໝາຍ

1) ຄະນະລັດຖະມົນຕີ

2) ສະມາຊິກສະພາຜູ້ແທນລາດສະດອນຈຳນວນບໍ່ໜ້ອຍກວ່າ 20 ທ່ານ

3) ສານຫຼືອົງກອນອິດສະຫຼະຕາມລັດຖະທຳມະນູນ ສະເພາະກົດໝາຍທີ່ປະທານສານຫຼືປະທານອົງກອນນັ້ນເປັນຜູ້ຮັກສາກວດກາການປະຕິບັດຕາມກົດໝາຍນັ້ນ

4) ຜູ້ມີສິດເລືອກຕັ້ງຈຳນວນບໍ່ໜ້ອຍກວ່າ 10,000 ຄົນ ເຂົ້າຊື່ສະເໜີກົດໝາຍຕໍ່ປະທານລັດຖະສະພາແມ່ນສະເພາະຮ່າງພະລາດຊະບັນຫຍັດທີ່ກ່ຽວກັບໝວດ 3 ສິດແລະເສລີພາບຂອງຊົນຊາວໄທ ແລະໝວດ 5 ແນວນະໂຍບາຍພື້ນຖານແຫ່ງລັດ ຂອງລັດຖະທຳມະນູນປີ 2008

ການສະເໜີຮ່າງພະລາດຊະບັນຫຍັດຕ້ອງສະເໜີຕໍ່ສະພາຜູ້ແທນລາດສະດອນກ່ອນ ໂດຍຕ້ອງມີຂໍ້ວິເຄາະສັງລວມສາລະສຳຄັນຂອງຮ່າງພະລາດຊະບັນຫຍັດດ້ວຍ ທັງນີ້ຮ່າງພະລາດຊະບັນຫຍັດທີ່ສະເໜີຕໍ່ລັດຖະສະພາຕ້ອງເປີດເຜີຍໃຫ້ປະຊາຊົນຮັບຮູ້ແລະໃຫ້ປະຊາຊົນສາມາດເຂົ້າຖືງຂໍ້ມູນຣາຍລະອຽດຂອງຮ່າງພະລາດຊະບັນຫຍັດນັ້ນໄດ້ໂດຍສະດວກ

- ຫາກແມ່ນພະລາດຊະບັນຫຍັດກ່ຽວກັບການເງິນ

ຫາກແມ່ນຮ່າງພະລາດຊະບັນຫຍັດທີ່ສະເໜີໂດຍສະມາຊິກສະພາຜູ້ແທນລາດສະດອນ ສານ ຫຼື ອົງກອນອິດສະຫຼະຕາມລັດຖະທຳມະນູນ ຫຼືຜູ້ມີສິດເລືອກຕັ້ງເປັນຮ່າງພະລາດຊະບັນຫຍັດກ່ຽວກັບການເງິນ ຈະສະເໜີໄດ້ເມື່ອນາຍົກລັດຖະມົນຕີໄດ້ຮັບຮອງເອົາແລ້ວ

ຮ່າງພະລາດຊະບັນຫຍັດກ່ຽວກັບການເງິນ ແມ່ນຮ່າງພະລາດຊະບັນຫຍັດທີ່ກ່ຽວກັບ ດັ່ງນີ້

1) ການຕັ້ງຂຶ້ນ ຍົກເລີກ ລົດ ປ່ຽນແປງ ແກ້ໄຂ ຫຼຸດຜ່ອນ ຫຼືວາງລະບຽບກ່ຽວກັບພາສີຫຼືອາກອນ

2) ການແບ່ງຮັບ ຄຸ້ມຄອງ ນຳໃຊ້ ຫຼືຂ່າຍເງິນແຜ່ນດິນ ຫຼືໂອນງົບປະມານຣາຍຂ່າຍຂອງແຜ່ນດິນ

3) ການກູ້ເງິນ ການຄ້ຳປະກັນ ການໃຊ້ເງິນກູ້ ຫຼືການດຳເນີນການທີ່ຜູກພັນຊັບສິນຂອງລັດ

4) ເງິນ

ຫາກແມ່ນຂ້ອງໃຈວ່າຮ່າງພະລາດຊະບັນຫຍັດໃດເປັນຮ່າງພະລາດຊະບັນຫຍັດກ່ຽວກັບການເງິນ ຫຼືບໍ່ໃຫ້ປະທານສະພາຜູ້ແທນລາດສະດອນກັບປະທານຄະນະກຳມາທິການສາມັນຂອງສະພາຜູ້ແທນລາດສະດອນທຸກຄະນະປະຊຸມຮ່ວມກັນເພື່ອຕັດສິນ ໂດຍໃຫ້ປະຊຸມພິຈາລະນາໃນ 15 ມື້ ນັບແຕ່ມື້ທີ່ມີຂໍ້ຂ້ອງໃຈ ຊຶ່ງມະຕິກອງປະຊຸມໃຫ້ອີງໃສ່ສຽງສ່ວນຫຼາຍ ແລະຖ້າສຽງເທົ່າກັນໃຫ້ປະທານສະພາຜູ້ແທນລາດສະດອນເປັນຜູ້ອອກສຽງຊີ້ຂາດ

ຫາກແມ່ນປະຊາຊົນໄດ້ສະເໜີຮ່າງພະລາດຊະບັນຫຍັດໃດແລ້ວ ແລ້ວຄະນະລັດຖະມົນຕີ ຫຼືສະມາຊິກສະພາຜູ້ແທນລາດສະດອນ ໄດ້ສະເໜີຮ່າງພະລາດຊະບັນຫຍັດທີ່ມີຫຼັກການຄ້າຍຄືກັນກັບຮ່າງພະລາດຊະບັນຫຍັດນັ້ນອີກ ວຸດທິສະພາຕ້ອງໃຫ້ຜູ້ແທນຂອງປະຊາຊົນທີ່ເຂົ້າຊື່ສະເໜີຮ່າງພະລາດຊະບັນຫຍັດນັ້ນ ເຂົ້າຊີ້ແຈງ ຫຼັກການຮ່າງພະລາດຊະບັນຫຍັດ ແລະຄະນະກຳມາທິການວິສາມັນເພື່ອພິຈາລະນາຮ່າງພະລາດຊະບັນຫຍັດດັ່ງກ່າວ ຕ້ອງປະກອບດ້ວຍຜູ້ແທນຂອງປະຊາຊົນທີ່ເຂົ້າສະເໜີຮ່າງພະລາດຊະບັນຫຍັດນັ້ນບໍ່ໜ້ອຍກວ່າ 1 ໃນ 3 ຂອງຈຳນວນກຳມາທິການທັງໝົດ

**1.2.2 ການພິຈາລະນາຮ່າງພະລາດຊະບັນຫຍັດຂອງວຸດທິສະພາ**

ເມື່ອສະພາຜູ້ແທນລາດສະດອນ ໄດ້ພິຈາລະນາຮ່າງພະລາດຊະບັນຫຍັດສຳເລັດແລະລົງມະຕິເຫັນຊອບແລ້ວ ສະພາຜູ້ແທນລາດສະດອນ ຕ້ອງສົ່ງຮ່າງພະລາດຊະບັນຫຍັດນັ້ນຕໍ່ວຸດທິສະພາ ແລະວຸດທິສະພາຕ້ອງພິຈາລະນາໃຫ້ແລ້ວໃນ 60 ມື້ ແຕ່ຫາກເປັນຮ່າງພະລາດຊະບັນຫຍັດກ່ຽວກັບການເງິນ ແມ່ນຕ້ອງພິຈາລະນາໃຫ້ແລ້ວໃນ 30 ມື້ ຍົກເວັ້ນແຕ່ວ່າວຸດທິສະພາໄດ້ລົງມະຕິໃຫ້ຂະຫຍາຍເວລາອອກໄປອີກ ແຕ່ຕ້ອງບໍ່ຫຼາຍກວ່າ 30 ມື້

ຈຳນວນມື້ໃຫ້ນັບແຕ່ມື້ໃນລະຫວ່າງເປີດສະໄໝກອງປະຊຸມ ແລະໃຫ້ນັບແຕ່ມື້ອຮ່າງພະລາດຊະບັນຫຍັດນັ້ນມາຮອດວຸດທິສະພາ

ຣະຍະເວລາການພິຈາລະນາຂອງວຸດທິສະພານີ້ ຕ້ອງບໍ່ນັບຮວມໄລຍະເວລາທີ່ຢູ່ໃນການພິຈາລະນາຂອງສານລັດຖະທຳມະນູນ ຫາກແມ່ນວ່າມີຜູ້ຂ້ອງໃຈວ່າຮ່າງພະລາດຊະບັນຫຍັດທີ່ຄະນະລັດຖະມົນຕີ ຫຼືສະມາຊິກສະພາຜູ້ແທນລາດ

ສະດອນສະເໜີອມີຫຼັກການຄ້າຍຄືງກັນກັບຫຼັກການຂອງຮ່າງພະລາດຊະບັນຫຍັດທີ່ຖືກຍັບຍັ້ງໄວ້ ຖ້າວຸດທິສະພາພິຂາລະນາບໍ່ແລ້ວໃນເວລາທີ່ກໍາໜົດ ໃຫ້ຖືອວ່າວຸດທິສະພາມີມະຕິຮັບຮອງເອົາແລ້ວ

ຫາກແມ່ນຮ່າງພະລາດຊະບັນຫຍັດນັ້ນ ປະທານສະພາຜູ້ແທນລາດສະດອນແຈ້ງວ່າເປັນຮ່າງພະລາດຊະບັນຫຍັດກ່ງວກັບການເງິນ ໃຫ້ຄໍາແຈ້ງນັ້ນຖືເປັນອັນເດັດຂາດ ແຕ່ຫາກແຈ້ງວ່າບໍ່ເປັນຮ່າງພະລາດຊະບັນຫຍັດກ່ງວກັບການເງິນ ກໍ່ໃຫ້ຖືວ່າບໍ່ເປັນ

**1.2.3 ຜົນການພິຈາລະນາຮ່າງພະລາດຊະບັນຫຍັດຂອງວຸດທິສະພາ**

ເມື່ອວຸດທິສະພາໄດ້ພິຈາລະນາຮ່າງພະລາດຊະບັນຫຍັດແລ້ວ

1) ຫາກຮັບຮອງເອົາ ໃຫ້ດໍາເນີນການປະກາດນໍາໃຊ້ມີຜົນສັກສິດ ໂດຍນາຍົກລັດຖະມົນຕີຈະເອົາຂຶ້ນຖະຫວາຍເຈົ້າຊີວິຕໃນ 20 ມື້ ນັບແຕ່ມື້ໄດ້ຮັບຮ່າງພະລາດຊະບັນຫຍັດນັ້ນຈາກລັດຖະສະພາ ເພື່ອໃຫ້ເຈົ້າຊີວິດລົງນາມປະກາດນໍາໃຊ້ໃຫ້ມີຜົນສັກສິດເປັນກົດໝາຍ

2) ຫາກບໍ່ຮັບຮອງເອົາ ໃຫຖືວ່າຍັບຍັ້ງຮ່າງພະລາດຊະບັນຫຍັດນັ້ນໄວ້ກ່ອນ ແລະສົ່ງກັບຄືນໄປຍັງສະພາຜູ້ແທນລາດສະດອນ

3) ຫາກວຸດທິສະພາໄດ້ແກ້ໄຂເພີ່ມຕື່ມ ໃຫ້ສົ່ງຮ່າງພະລາດຊະບັນຫຍັດທີ່ແກ້ໄຂເພີ່ມຕື່ມແລ້ວນັ້ນກັບຄືນໃຫ້ສະພາຜູ້ແທນລາດສະດອນ

- ຫາກສະພາຜູ້ແທນລາດສະດອນຮັບຮອງເອົາການແກ້ໄຂເພີ່ມຕື່ມໃນດໍາເນີນການ ປະກາດນໍາໃຊ້ມີຜົນສັກສິດເປັນກົດໝາຍຕໍ່ໄປ
- ຫາກເປັນຢ່າງອື່ນ ໃຫ້ແຕ່ລະສະພາຕັ້ງບຸກຄົນທີ່ເປັນຫຼືບໍ່ເປັນສະມາຊິກຂອງສະພານັ້ນ ຈໍານວນເທົ່າກັນຕາມທີ່ສະພາຜູ້ແທນລາດສະດອນກໍາໜົດ ປະກອບສ່ວນເປັນຄະນະກໍາມາທິການຮ່ວມກັນເພື່ອພິຈາລະນາຮ່ວມກັນແລ້ວໃຫ້ສະພາທັ້ງສອງ ຖ້າສະພາທັ້ງສອງຮັບຮອງເອົາຮ່າງພະລາດຊະບັນຫຍັດທີ່ຄະນະກໍາມາທິການພິຈາລະນາຮ່ວມກັນແລ້ວໃຫ້ດໍາເນີນການປະກາດນໍາໃຊ້ມີຜົນສັກສິດເປັນກົດໝາຍຕໍ່ໄປ ຫາກສະພາໃດສະພາໜຶ່ງບໍ່ເຫັນດີຮັບຮອງເອົາໃຫ້ຖືອວ່າຍັບຍັ້ງໄວ້ກ່ອນ

ຮ່າງພະລາດຊະບັນຫຍັດທີ່ວຸດທິສະພາບໍ່ຮັບຮອງເອົານັ້ນ ສະພາຜູ້ແທນລາດສະດອນຈະຍົກຂຶ້ນມາພິຈາລະນາໄດ້ໃໝ່ເມື່ອເລີຍ 180 ມື້ໄປແລ້ວ ນັບແຕ່ມື້ທີ່ວຸດທິສະພາສົ່ງກັບຄືນ ແຕ່ຫາກແມ່ນສະພາໃດສະພາໜຶ່ງບໍ່ເຫັນດີແລະຮັບຮອງເອົາຮ່າງກົດໝາຍທີ່ຄະນະກໍາມາທິການຮ່ວມກັນພິຈາລະນາແລ້ວ ເຊັ່ນວ່ານີ້ ຫາກສະພາຜູ້ແທນລາດສະດອນລົງມະຕິຢືນຢັນຮ່າງກົດໝາຍເກົ່າຫຼືຮ່າງກົດໝາຍທີ່ຄະນະກໍາມາທິການຮ່ວມກັນພິຈາລະນາແລ້ວ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງສະມາຊິກທັ້ງໝົດທີ່ມີຢູ່ ໃຫ້ຖືວ່າຮ່າງພະລາດຊະບັນຫຍັດນັ້ນ ລັດຖະສະພາໄດ້ໃຫ້ຄວາມເຫັນຊອບແລະຮັບຮອງເອົາແລ້ວ ແລະໃຫ້ດໍາເນີນການປະກາດນໍາໃຊ້ມີຜົນສັກສິດເປັນກົດໝາຍຕໍ່ໄປ

ຫາກແມ່ນຮ່າງພະລາດຊະບັນຫຍັດທີ່ວຸດທິສະພາບໍ່ຮັບຮອງເອົານັ້ນ ເປັນຮ່າງພະລາດຊະບັນຫຍັດກ່ຽວກັບການເງິນ ສະພາຜູ້ແທນລາດສະດອນອາດຍົກຮ່າງກົດໝາຍນັ້ນພິຈາລະນາໄດ້ທັນທີ ແລະຫາກສະພາຜູ້ແທນລາດສະດອນລົງມະຕິຢືນຢັນຮັບຮອງເອົາ ຮ່າງເກົ່າຫຼືຮ່າງທີ່ຄະນະກຳມາທິການຮ່ວມກັນພິຈາລະນາແລ້ວດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງສະມາຊິກທັງໝົດທີ່ມີຢູ່ ໃຫ້ຖືວ່າຮ່າງພະລາດຊະບັນຫຍັດນັ້ນ ລັດຖະສະພາໄດ້ໃຫ້ຄວາມເຫັນຊອບແລະຮັບຮອງເອາແລ້ວ ແລະໃຫ້ດຳເນີນການປະກາດນຳໃຊ້ມີຜົນສັກສິດເປັນກົດໝາຍຕໍ່ໄປ

**1.2.4 ການຄວບຄຸມການສ້າງກົດໝາຍບໍ່ໃຫ້ຂັດຫຼືແຍ້ງກັບລັດຖະທຳມະນູນ**

ຮ່າງພະລາດຊະບັນຫຍັດໃດທີ່ລັດຖະສະພາໄດ້ຮັບຮອງເອົາແລ້ວ ກ່ອນທີ່ນາຍົກລັດຖະມົນຕີຈະນຳຂຶ້ນຖະຫວາຍໃຫ້ເຈົ້າຊີວິດລົງຊື່ປະກາດໃຊ້ ຫຼືຮ່າງພະລາດຊະບັນຫຍັດໃດທີ່ລັດຖະສະພາລົງມະຕິຢືນຢັນຍ້ອນວ່າເຈົ້າຊີວິດບໍ່ເຫັນຊອບດ້ວຍແລ້ວ ກ່ອນທີ່ນາຍົກລັດຖະມົນຕີຈະນຳຂຶ້ນຖະຫວາຍອີກຄັ້ງໜຶ່ງ

1) ຫາກແມ່ນສະມາຊິກສະພາຜູ້ແທນລາດສະດອນ ສະມາຊິກວຸດທິສະພາ ຫຼືສະມາຊິກຂອງທັງສອງສະພາຮວມກັນ ມີຈຳນວນບໍ່ໜ້ອຍກວ່າ 1 ໃນ 10 ຂອງຈຳນວນສະມາຊິກທັງໝົດທີ່ມີຢູ່ຂອງທັງ 2 ສະພາ ເຫັນວ່າຮ່າງພະລາດຊະບັນຫຍັດດັ່ງກ່າວ ມີຂໍ້ຄວາມຂັດຫຼືແຍ້ງຕໍ່ລັດຖະທຳມະນູນ ຫຼືສ້າງຂຶ້ນບໍ່ຖືກຕ້ອງຕາມທີ່ລັດຖະທຳມະນູນກຳໜົດ ໃຫ້ສະເໜີຄວາມເຫັນຕໍ່ປະທານສະພາຜູ້ແທນລາດສະດອນ ປະທານວຸດທິສະພາ ຫຼືປະທານລັດຖະສະພາ ແລ້ວໃຫ້ປະທານແຫ່ງສະພາທີ່ໄດ້ຮັບຄວາມເຫັນຊອບດັ່ງກ່າວສົ່ງຂໍ້ຄວາມເຫັນນັ້ນໄປຍັງສານລັດຖະທຳມະນູນ ເພື່ອໃຫ້ກວດກາ ແລະແຈ້ງໃຫ້ນາຍົກລັດຖະມົນຕີຮັບຮູ້ ໂດຍບໍ່ຊັກຊ້າ

2) ຫາກແມ່ນນາຍົກລັດຖະມົນຕີເຫັນວ່າຮ່າງພະລາດຊະບັນຫຍັດດັ່ງກ່າວ ມີຂໍ້ຄວາມຂັດຫຼືແຍ້ງຕໍ່ລັດຖະທຳມະນູນ ຫຼືສ້າງຂຶ້ນບໍ່ຖືກຕ້ອງຕາມທີ່ລັດຖະທຳມະນູນກຳໜົດ ໃຫ້ສົ່ງຂໍ້ຄວາມເຫັນນັ້ນໄປຍັງສານລັດຖະທຳມະນູນ ເພື່ອໃຫ້ກວດກາ ແລະແຈ້ງໃຫ້ປະທານສະພາຜູ້ແທນລາດສະດອນແລະປະທານວຸດທິສະພາຮັບຮູ້ໂດຍບໍ່ຊັກຊ້າ

ໃນລະຫວ່າງທີ່ສານລັດຖະທຳມະນູນກວດກາຢູ່ໃຫ້ນາຍົກລັດຖະມົນຕີຫຍຸດດຳເນີນການເພື່ອປະກາດນຳໃຊ້ຮ່າງພະລາດຊະບັນຫຍັດນັ້ນຈົນກວ່າສານລັດຖະທຳມະນູນຈະກວດກາແລ້ວ

**ຜົນຂອງການກວດກາ**

1) ຫາກແມ່ນສານລັດຖະທຳມະນູນກວດກາແລ້ວຕັດສິນວ່າ ຮ່າງພະລາດຊະບັນຫຍັດນັ້ນ ມີຂໍ້ຄວາມຂັດຫຼືແຍ້ງຕໍ່ລັດຖະທຳມະນູນແລະຂໍ້ຄວາມດັ່ງກ່າວເປັນສາລະສຳຄັນ ໃຫ້ຮ່າງພະລາດຊະບັນຫຍັດນັ້ນເປັນອັນຕົກໄປ

2) ຫາກແມ່ນສານລັດຖະທຳມະນູນກວດກາແລ້ວຕັດສິນວ່າມີຂໍ້ຄວາມຂັດຫຼືແຍ້ງຕໍ່ລັດຖະທຳມະນູນ ແຕ່ຂໍ້ຄວາມດັ່ງກ່າວບໍ່ແມ່ນສາລະສຳຄັນໃຫ້ຂໍ້ຄວາມທີ່ຂັດຫຼືແຍ້ງນັ້ນເປັນອັນຕົກໄປ ແລະໃຫ້ນາຍົກລັດຖະມົນຕີນຳຖະຫວາຍເຈົ້າຊີວິດເພື່ອລົງຊື່ ຫຼືນຳຖະຫວາຍເຈົ້າຊີວິດກັບຄືນໃໝ່ອີກຄັ້ງໜຶ່ງ

ການດຳເນີນການຄວບຄຸມການສັ່ງກົດໝາຍບໍ່ໃຫ້ຂັດຫຼືແຍ້ງຕໍ່ລັດຖະທຳມະນູນນີ້ ໃຫ້ນຳມາໃຊ້ບັງຄັບກັບຮ່າງຂໍ້ບັງຄັບການປະຊຸມວຸດທິສະພາທີ່ກອງປະຊຸມວຸດທິສະພາໄດ້ຮັບຮອງເອົາແລ້ວແຕ່ຍັງບໍ່ໄດ້ປະກາດໃນລາດຊະກິດຈານຸເບກສາດ້ວຍ

## 1.3 ການພິຈາລະນາຮ່າງພະລາດຊະບັນຫຍັດງົບປະມານຣາຍຈ່າຍ

### 1.3.1 ງົບປະມານຣາຍຈ່າຍ

ງົບປະມານຣາຍຈ່າຍຂອງແຜ່ນດິນໃຫ້ສ້າງເປັນພະລາດຊະບັນຫຍັດ ຫາກວ່າພະລາດຊະບັນຫຍັດງົບປະມານຣາຍຈ່າຍປະຈຳປີງົບປະມານອອກບໍ່ທັນປີງົບປະມານໃໝ່ ໃຫ້ນຳໃຊ້ກົດໝາຍວ່າດ້ວຍງົບປະມານຣາຍຈ່າຍໃນປີງົບປະມານເກົ່າໄປກ່ອນ

### 1.3.2 ການສະເໜີຮ່າງພະລາດຊະບັນຫຍັດງົບປະມານຣາຍຈ່າຍປະຈຳປີງົບປະມານ

ການສະເໜີຮ່າງພະລາດຊະບັນຫຍັດງົບປະມານຣາຍຈ່າຍປະຈຳປີງົບປະມານ ຕ້ອງມີເອກສານປະກອບດ້ວຍປະມານການຣາຍຮັບ ວັດຖຸປະສົງ ກິດຈະກຳ ແຜນງານ ໂຄງການໃນແຕ່ລະ ຣາຍການຂອງການໃຊ້ຈ່າຍງົບປະມານ ຖານະການເງິນການຄັງຂອງປະເທດ ພາບ ອົງຮວມຂອງສະພາບການເສດຖະກິດ ການໃຊ້ຈ່າຍແລະການຈັດຫາຣາຍໄດ້ ປະໂຫຍດແລະການຂາດຣາຍໄດ້ຈາກການຍົກເວັ້ນພາສີບາງຣາຍການ ຄວາມຈຳເປັນໃນການຕັ້ງງົບປະມານຜູກພັນຂ້າມປີ ພາລະໜີ້ແລະການສ້າງໜີ້ຂອງລັດ ຖານະການເງິນຂອງລັດຖະວິສາຫະກິດໃນປີງົບປະມານນັ້ນແລະປີຜ່ານມາ ທັງໝົດແມ່ນເພື່ອໃຊ້ປະກອບການພິຈາລະນາ

### 1.3.3 ການພິຈາລະນາຮ່າງພະລາດຊະບັນຫຍັດງົບປະມານຂອງວຸດທິສະພາ

ການພິຈາລະນາຮ່າງພະລາດຊະບັນຫຍັດງົບປະມານຣາຍຈ່າຍປະຈຳປີງົບປະມານ ຮ່າງພະລາດຊະບັນຫຍັດງົບປະມານຣາຍຈ່າຍເພີ່ມຕື່ມ ແລະຮ່າງພະລາດຊະບັນຫຍັດໂອນເງິນງົບປະມານຣາຍຈ່າຍ ວຸດທິສະພາຕ້ອງຕັດສິນໃຈຮັບຮອງຫຼືບໍ່ຮັບຮອງເອົາໃນ 20 ມື້ ນັບແຕ່ມື້ທີ່ຮ່າງພະລາດຊະບັນຫຍັດນັ້ນມາຖືງວຸດທິສະພາ ໂດຍຈະແກ້ໄຂເພີ່ມຕື່ມບໍ່ໄດ້ ຫາກແມ່ນເລີຍເວລາແລ້ວພິຈາລະນາບໍ່ແລ້ວ ໃຫ້ຖືວ່າວຸດທິສະພາໄດ້ຮັບຮອງເອົາແລ້ວ ເມື່ອວຸດທິສະພາໄດ້ຮັບຮອງເອາແລ້ວໃຫ້ດຳເນີນການປະກາດນຳໃຊ້ມີຜົນສັກສິດເປັນກົດໝາຍຕໍ່ໄປ

ຫາກວຸດທິສະພາບໍ່ເຫັນດີແລະບໍ່ຮັບຮອງເອົາ ສະພາຜູ້ແທນລາດສະດອນສາມາດຍົກຂຶ້ນພິຈາລະນາໃໝ່ໄດ້ທັນທີແລະຫາກແມ່ນສະພາຜູ້ແທນລາດສະດອນລົງມະຕິ ຍືນຍັນຮ່າງກົດໝາຍເກົ່າດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ມີຢູ່ ໃຫ້ຖືວ່າລັດຖະສະພາໄດ້ຮັບຮອງເອົາແລ້ວ ເມື່ອວຸດທິສະພາໄດ້ຮັບຮອງເອາແລ້ວໃຫ້ດຳເນີນການປະກາດນຳໃຊ້ມີຜົນສັກສິດເປັນກົດໝາຍຕໍ່ໄປ

ການພິຈາລະນາຂອງວຸດທິສະພາຫຼືຂອງຄະນະກຳມາທິການ ການສະເໜີ ການແປຍັດຕິ ການອະພິປາຍປັນຫາຫຼືການເຮັດແນວໃດທີ່ແມ່ນມີຜົນໃຫ້ສະມາຊິກວຸດທິສະພາ ຫຼືກຳມາທິການມີສ່ວນໄດ້ປະໂຫຍດບໍ່ວ່າທາງກົງຫຼືອ້ອມໃນການ

ໃຊ້ງົບປະມານນັ້ນ ແມ່ນເຮັດບໍ່ໄດ້ ແລະຫາກແມ່ນມີເຫດການໃດທີ່ສະມາຊິກວຸດທິສະພາຈຳນວນບໍ່ໜ້ອຍກວ່າ 1 ໃນ 10 ຂອງຈຳນວນສະມາຊິກທັງໝົດທີ່ມີຢູ່ ເຫັນວ່າມີຜົນໃຫ້ສະມາຊິກວຸດທິສະພາຫຼືກຳມາທິການມີສ່ວນໄດ້ປະໂຫຍດບໍ່ວ່າທາງກົງຫຼືອ້ອມໃນການໃຊ້ງົບປະມານລາຍຈ່າຍ ໃຫ້ສະເໜີຄວາມເຫັນໃຫ້ສານລັດຖະທຳມະນູນກວດກາ ແລະສານລັດຖະທຳມະນູນຕ້ອງກວດກາໃຫ້ແລ້ວໃນ 7 ມື້ ນັບແຕ່ມື້ທີ່ໄດ້ຮັບຄວາມເຫັນດັ່ງກ່າວ ຫາກສານລັດຖະທຳມະນູນເຫັນວ່າ ການເຮັດດັ່ງກ່າວແມ່ນໄດ້ຜົນປະໂຫຍດໃນການນຳໃຊ້ງົບປະມານເຂົ້າເຈົ້າຕົນ ໃຫ້ຖືວ່າການສະເໜີ ການແປຍັດຕິ ການອະພິປາຍປັນຫາ ຫຼືການເຮັດດັ່ງກ່າວນັ້ນບໍ່ມີຜົນ

## 1.4 ການພິຈາລະນາອະນຸມັດພະລາດຊະກຳໜົດ

### 1.4.1 ການສ້າງພະລາດຊະກຳໜົດ

ເພື່ອປະໂຫຍດໃນການປ້ອງກັນຄວາມມັ່ນຄົງຂອງປະເທດ ຄວາມສະຫງົບຮຽບຮ້ອຍຂອງສາທາລະນະ ຄວາມໝັ້ນຄົງທາງເສດຖະກິດ ຫຼື ປັດປ້ອງໄພພິບັດສາທາລະນະ ເຈົ້າຊີວິດມີສິດປະກາດໃຊ້ພະລາດຊະກຳໜົດໃຫ້ມີຜົນສັກສິດຄ້າຍຄືພະລາດຊະບັນຫຍັດໄດ້ ຫາກຄະນະລັດຖະມົນຕີເຫັນວ່າ ສຸກເສີນ ຮີບດ່ວນ ແລະບໍ່ອາກຫຼີກລ້ຽງໄດ້

### 1.4.2 ການສະເໜີພະລາດຊະກຳໜົດຕໍ່ລັດຖະສະພາ

ໃນກອງປະຊຸມລັດຖະສະພາເທື່ອຕໍ່ໄປ ຄະນະລັດຖະມົນຕີຕ້ອງສະເໜີພະລາດຊະກຳໜົດນັ້ນຕໍ່ລັດສະພາໂດຍບໍ່ຊັກຊ້າ ຫາກແມ່ນຢູ່ນອກສະໄໝກອງປະຊຸມແລະການລໍຖ້າໃຫ້ເປີດສະໄໝກອງປະຊຸມວິສາມັນຈະເປັນການຊັກຊ້າ ຄະນະລັດຖະມົນຕີຕ້ອງດຳເນີນການໃຫ້ມີການນັດເປີດ ກອງປະຊຸມວິສາມັນຂຶ້ນເພື່ອພິຈາລະນາພະລາດຊະກຳໜົດໂດຍເຮັວ

### 1.4.3 ຜົນການພິຈາລະນາ

1) ສະພາຜູ້ແທນລາດສະດອນ ຮັບຮອງເອົາພະລາດຊະກຳໜົດນັ້ນຈະມີຜົນສັກສິດ ເປັນພະລາດຊະບັນຫຍັດຕໍ່ໄປ ແບ່ງໄດ້ເປັນ 2 ເຫດ ດັ່ງນີ້

(1) ສະພາຜູ້ແທນລາດສະດອນແລະວຸດທິສະພາຮັບຮອງເອົາພະລາດຊະກຳໜົດ

(2) ສະພາຜູ້ແທນລາດສະດອນຮັບຮອງເອົາ ແຕ່ວຸດທິສະພາບໍ່ຮັບຮອງ ແລະສະພາຜູ້ແທນລາດສະດອນຢັ້ງຢືນການຮັບຮອງເອົາດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງາຂອງຈຳນວນສະມາຊິກທັງໝົດທີ່ມີຢູ່

2) ລັດຖະສະພາບໍ່ຮັບຮອງພະລາດຊະກຳໜົດ ຊຶ່ງມີຜົນໃຫ້ພະລາດຊະກຳໜົດນັ້ນຕົກໄປ ແບ່ງໄດ້ເປັນ 2 ເຫດ ດັ່ງນີ້

(1) ສະພານຜູ້ແທນລາດສະດອນ ບໍ່ຮັບຮອງເອົາ

(2) ສະພາຜູ້ແທນລາດສະດອນຮັບຮອງເອົາ ແຕ່ວຸດທິສະພາບໍ່ຮັບຮອງ ແລະສະພາຜູ້ແທນລາດສະດອນຢັ້ງຢືນການຮັບຮອງເອົາດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງາຂອງຈຳນວນສະມາຊິກທັງໝົດທີ່ມີຢູ່

ເຖິງແມ້ວ່າພະລາດຊະກຳໜົດຈະຕົກໄປ ແຕ່ບໍ່ກະທົບກະເທືອນກິດຈະການທີ່ໄດ້ເຮັດໄປແລ້ວໃນລະຫວ່າງນຳໃຊ້ພະລາດຊະກຳໜົດນັ້ນ ແລະຫາກພະລາຊະກຳໜົດທີ່ຕ້ອງຕົກໄປນັ້ນມີຜົນເພີ່ມຕື່ມຫຼືຍົກເລີກຂໍ້ກົດໝາຍໃດ ໃຫ້ຂໍ້ກົດໝາຍທີ່ມີຢູ່ກ່ອນແກ້ໄຂເພີ່ມຕື່ມຫຼືຍົກເລີກມີຜົນສັກສິດຕໍ່ໄປນັບແຕ່ມື້ບໍ່ຮັບຮອງເອົາພະລາດຊະກຳໜົດນັ້ນມີຜົນ

ການຮັບຮອງຫຼືບໍ່ຮັບຮອງເອົາພະລາດຊະກຳໜົດ ນາຍົກລັດຖະມົນຕີຕ້ອງປະກາດໃນລາດຊະກິດຈານຸເບກສາ ຫາກບໍ່ຮັບຮອງ ໃຫ້ມີຜົນນັບແຕ່ມື້ປະກາດໃນລາດຊະກິດຈານຸເບກສາ

ການຍັ້ງຍືນການຮັບຮອງເອົາພະລາດຊະກຳໜົດຕ້ອງເຮັດໃນເວລາທຳອິດທີ່ມີການປະຊຸມສະພານັ້ນໆ

**1.4.4 ການຂໍໃຫ້ສານລັດຖະທຳມະນູນພິຈາລະນາວ່າພະລາດຊະກຳໜົດບໍ່ຖືກຕ້ອງຕາມລັດຖະທຳມະນູນ**

ກ່ອນທີ່ສະພາຜູ້ແທນລາດສະດອນຫຼືວຸດທິສະພາຈະພິຈາລະນາເຫັນຊອບພະລາດຊະກຳຫໜົດໃດ ສະມາຊິກສະພາຜູ້ແທນລາດສະດອນ ຫຼືສະມາຊິກວຸດທິສະພາບໍ່ໜ້ອຍກວ່າ 1 ໃນ 5 ຂອງຈຳນວນສະມາຊິກທັງໝົດເທົ່າທີ່ມີຢູ່ຂອງແຕ່ລະສະພາມີສິດເຂົ້າຊື່ເພື່ອສະເໜີຄວາມເຫັນຕໍ່ປະທານສະພາທີ່ເຈົ້າຕົນເປັນສະມາຊິກວ່າພະລາດຊະກຳໜົດນັ້ນບໍ່ໄດ້ສ້າງຂຶ້ນເພື່ອປະໂຫຍດໃນການປ້ອງກັນຄວາມມັ່ນຄົງຂອງປະເທດ ຄວາມສະຫງົບຮຽບຮ້ອຍຂອງສາທາລະນະ ຄວາມໝັ້ນຄົງທາງເສດຖະກິດ ຫຼື ປັດປ້ອງໄພພິບັດສາທາລະນະ ປະທານແຫ່ງສະພານັ້ນຕ້ອງສົ່ງຄວາມເຫັນໄປຍັງສານລັດຖະທຳມະນູນໃນ 3 ມື້ ນັບແຕ່ມື້ໄດ້ຮັບຄວາມເຫັນ ເມື່ອສານລັດຖະທຳມະນູນພິຈາລະນາແລ້ວ ຕ້ອງແຈ້ງຜົນການຕັດສິນໄປໃຫ້ປະທານສະພາທີ່ສົ່ງຄວາມເຫັນມາ

ປະທານສະພາຜູ້ແທນລາດສະດອນຫຼືປະທານວຸດທິສະພາ ເມື່ອໄດ້ຮັບຄວາມເຫັນຈາກສະມາຊິກສະພາຜູ້ແທນລາດສະດອນ ຫຼືສະມາຊິກວຸດທິສະພາແລ້ວ ໃຫ້ລໍຖ້າການພິຈາລະນາພະລາດຊະກຳໜົດໄວ້ກ່ອນຈົນກວ່າຈະໄດ້ຮັບຄຳແຈ້ງຈາກສານລັດຖະທຳມະນູນ

ຫາກແມ່ນສານລັດຖະທຳມະນູນໄດ້ຕັດສິນວ່າພະລາດຊະກຳໜົດໃດບໍ່ຖືກຕ້ອງແລ້ວ ໃຫ້ຖືວ່າພະລາດຊະກຳໜົດນັ້ນບໍ່ມີຜົນສັກສິດມາຕັ້ງແຕ່ຕົ້ນ ໂດຍຄຳຕັດສິນດັ່ງກ່າວຂອງສານລັດຖະທຳມະນູນຕ້ອງມີຄະແນນສຽງບໍ່ໜ້ອຍກວ່າ 2 ໃນ 3 ຂອງຈຳນວນຕຸລາການສານລັດຖະທຳມະນູນທັງໝົດ

**1.4.5 ພະລາດຊະກຳໜົດກ່ຽວກັບພາສີອາກອນຫຼືການເງິນ**

ໃນລະຫວ່າງເປີດສະໄໝກອງປະຊຸມ ຖ້າມີຄວາມຈຳເປັນຕ້ອງມີກົດໝາຍກ່ຽວກັບພາສີອາກອນ ຫຼືການເງິນທີ່ຕ້ອງສ້າງຂຶ້ນໂດຍດ່ວນແລະລັບເພື່ອຮັກສາປະໂຫຍດຂອງແຜ່ນດິນ ເຈົ້າຊີວິດມີສິດປະກາດໃຊ້ພະລາດຊະກຳໜົດໄດ້ຕາມການສະເໜີຂອງນາຍົກລັດຖະມົນຕີ

ພະລາດຊະກຳໜົດດັ່ງກ່າວຕ້ອງນຳສະເໜີຕໍ່ສະພາຜູ້ແທນລາດສະດອນໃນ 3 ມື້ນັບແຕ່ມື້ຖັດຈາກມື້ປະກາດໃນລາດຊະກິດຈານຸເບກສາ ຊຶ່ງການພິຈາລະນາພະລາດຊະກຳໜົດກ່ຽວກັບພາສີອາກອນຫຼືການເງິນນີ້ ກໍ່ໃຫ້ຖືປະຕິບັດຄ້າຍຄືກັນກັບການພິຈາລະນາອະນຸມັດພະລາດຊະກຳໜົດທົ່ວໄປ

## 1.5 ການແກ້ໄຂເພີ່ມຕື່ມລັດຖະທຳມະນູນ

### 1.5.1 ການສະເໜີແກ້ໄຂເພີ່ມຕື່ມລັດຖະທຳມະນູນ

ຜູ້ມີສິດສະເໜີແກ້ໄຂເພີ່ມຕື່ມລັດຖະທຳມະນູນ

1) ຄະນະລັດຖະມົນຕີ

2) ສະມາຊິກສະພາຜູ້ແທນລາດສະດອນ

3) ສະມຊິກສະພາຜູ້ແທນລາດສະດອນຈຳນວນບໍ່ໜ້ອຍກວ່າ 1 ໃນ 5 ຂອງຈຳນວນສະມາຊິກທັ້ງໝົດທີ່ມີຢູ່

4) ປະຊາຊົນຜູ້ມີສິດເລືອກຕັ້ງຈຳນວນບໍ່ໜ້ອຍກວ່າ 50,000 ຄົນ

ໂດຍການສະເໜີຍັດຕິຫຼືປັນຫາແກ້ໄຂເພີ່ມຕື່ມນັ້ນຈະຕ້ອງສະເໜີເປັນຮ່າງລັດຖະທຳມະນູນແກ້ໄຂເພີ່ມຕື່ມ

ຍັດຕິຫຼືປັນຫາຂໍ້ແກ້ໄຂເພີ່ມຕື່ມລັດຖະທຳມະນູນທີ່ມີຜົນເປັນການປ່ຽນແປງການປົກຄອງລະບອບປະຊາທິປະໄຕອັນມີເຈົ້າຊີວິດເປັນປະມຸກ ຫຼືປ່ຽນແປງຮູບຂອງລັດແມ່ເຮັດບໍ່ໄດ້

### 1.5.2 ການພິຈາລະນາຮ່າງລັດຖະທຳມະນູນແກ້ໄຂເພີ່ມຕື່ມ

ລັດຖະສະພາ ຕ້ອງພິຈາລະນາເປັນ 3 ຂັ້ນຕອນ

ຂັ້ນທີ່ 1 ຂັ້ນຮັບຫຼັກການ ການອອກສຽງລົງຄະແນນຕ້ອງໃຊ້ວິທີຮຽກຊື່ລົງຄະແນນຢ່າງເປີດເຜຍ ແລະຕ້ອງມີຄະແນນສຽງເຫັນດີຮັບຮອງການແກ້ໄຂເພີ່ມຕື່ມ ບໍ່ໜ້ອຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທັ້ງໝົດ ເທົ່າທີ່ມີຢູ່ຂອງທັ້ງສອງສະພາ

ຂັ້ນທີ່ 2 ຂັ້ນພິຈາລະນາໄລ່ຮຽງລຳດັບຕາມມາດຕາ ແມ່ນຕ້ອງຈັດໃຫ້ມີການຮັບຟັງຄວາມຄິດເຫັນຈາກປະຊາຊົນທີ່ເຂົ້າຊື່ສະເໜີຮ່າງລັດຖະທຳມະນູນແກ້ໄຂເພີ່ມຕື່ມນຳດ້ວຍ ແລະໃນການອອກສຽງລົງຄະແນນໃຫ້ອີງໃສ່ສຽງສ່ວນຫຼາຍ

ເມື່ອຂັ້ນທີ່ 2 ພິຈາລະນາແລ້ວແລ້ວ ໃຫ້ລໍຖ້າໄວ້ 15 ມື້ ລັດຖະສະພາຈຶ່ງດຳເນີນການພິຈາລະນາ

ຂັ້ນທີ່ 3 ຂັ້ນຮັບຮອງເອົາ ໃຫ້ໃຊ້ວິທີຮຽກຊື່ແລະລົງຄະແນນໂດຍເປີດເຜຍ ແລະຕ້ອງມີຜູ້ເຫັນດີຮັບຮອງເອົາທີ່ຈະໃຫ້ມີຜົນສັກສິດ ເປັນລັດຖະທຳມະນູນບໍ່ໜ້ອຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ມີຢູ່ຂອງທັ້ງ 2 ສະພາ

### 1.5.3 ການປະກາດນຳໃຊ້

ເມື່ອລັດຖະສະພາໄດ້ຮັບຮອງເອົາແລ້ວ ໃຫ້ນຳຮ່າງລັດຖະທຳມະນູນແກ້ໄຂເພີ່ມຕື່ມນັ້ນຖະຫວາຍເຈົ້າຊີວິດເພື່ອລົງຊື່ ແລະໃຫ້ມີຜົນສັກສິດເປັນກົດໝາຍເມື່ອໄດ້ປະກາດໃນລາດຊະກິດຈານຸເບກສາແລ້ວ

# 2. ສິດແລະອຳນາດດ້ານການຄວບຄຸມການບໍລິຫານລາດຊະການແຜ່ນດິນ

## 2.1 ຮັບຮູ້ຄຳຖະແຫຼງນະໂຍບາຍຂອງຄະນະລັດຖະມົນຕີ

ຄະນະລັດຖະມົນຕີທີ່ຈະເຂົ້າບໍລິຫານລາດຊະການແຜ່ນດິນຕ້ອງຖະແຫຼງນະໂຍບາຍຕໍ່ລັດຖະສະພາ ແລະຊີ້ແຈງການເຮັດວຽກຕາມນະໂຍບາຍພື້ນຖານແຫ່ງລັດ ໂດຍບໍ່ຕ້ອງລົງມະຕິໃນ 15 ມື້ ນັບແຕ່ມື້ເຂົ້າເຮັດວຽກ ແລະເມື່ອໄດ້ຖະແຫຼງນະໂຍບາຍຕໍ່ລັດຖະສະພາແລ້ວຕ້ອງສ້າງແຜນການບໍລິຫານລາດສະການແຜ່ນດິນ ເພື່ອກຳໜົດແນວທາງການປະຕິບັດລາດສະການແຕ່ລະປີ

## 2.2 ການຕັ້ງກະທູ້ຖາມ

ສະມາຊິກວຸດທິສະພາທຸກຄົນມີສິດຕັ້ງກະທູ້ຖາມລັດຖະມົນຕີໃນເລື່ອງກ່ຽວກັບວຽກງານໃນໜ້າທີ່ໄດ້ ແຕ່ລັດຖະມົນຕີມີສິດບໍ່ຕອບ ຫາກຄະນະລັດຖະມົນຕີເຫັນວ່າເລື່ອງນັ້ນຍັງບໍ່ຄວນເປີດເຜີຍ ຍ້ອນກ່ຽວຂ້ອງກັບຄວາມໝັ້ນຄົງ ຄວາມສະຫງົບຮຽບຮ້ອຍ ຫຼືປະໂຫຍດສຳຄັນຂອງແຜ່ນດິນ

ຫາກວຸດທິສະພາໄດ້ມີການເປີດກອງປະຊຸມເພື່ອຕັ້ງກະທູ້ຖາມເລື່ອງກ່ຽວກັບວຽກງານໃນໜ້າທີ່ໃຫ້ຖືເປັນວຽກຂອງນາຍົກລັດຖະມົນຕີ ຫຼື ລັດຖະມົນຕີຜູ້ນັ້ນທີ່ຕ້ອງເຂົ້າຮ່ວມກອງປະຊຸມເພື່ອໄຂຂໍ້ຂ້ອງໃຈ ຊີ້ແຈງ ຫຼືຕອບກະທູ້ຖາມໃນເລື່ອງນັ້ນດ້ວຍເຈົ້າຕົນ ເວັ້ນແຕ່ມີເຫດຈຳເປັນອັນບໍ່ອາດຫຼີກລ້ຽງໄດ້ ຊຶ່ງຫາກບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ຈະຕ້ອງແຈ້ງໃຫ້ປະທານວຸດທິສະພາຮັບຮູ້ກ່ອນ ຫຼືໃນມື້ປະຊຸມວຸດທິສະພາໃນເລື່ອງນັ້ນ

## 2.3 ການເປີດອະພິປາຍທົ່ວໄປ

**2.3.1 ການເປີດອະພິປາຍທົ່ວໄປຂອງວຸດທິສະພາ** ສະມາຊິກວຸດທິສະພາຈຳນວນບໍ່ໜ້ອຍກວ່າ 1 ໃນ 3 ຂອງຈຳນວນສະມາຊິກທັງໝົດ ມີສິດເຂົ້າຊື່ເປີດອະພິປາຍທົ່ວໄປໃນວຸດທິສະພາ ເພື່ອໃຫ້ຄະນະລັດຖະມົນຕີ ຖະແຫຼງຂໍ້ຄວາມ ຫຼືຊີ້ແຈງປັນຫາສຳຄັນກ່ຽວກັບການບໍລິຫານລາດຊະການແຜ່ນດິນໂດຍບໍ່ມີການລົງມະຕິ

**2.3.2 ການເປີດອະພິປາຍທົ່ວໄປເພື່ອຮັບຟັງຄວາມຄິດເຫັນ** ຫາກແມ່ນມີປັນຫາສຳຄັນກ່ຽວກັບການບໍລິຫານລາດຊະການແຜ່ນດິນທີ່ຄະນະລັດຖະມົນຕີສົມຄວນ ຈະຮັບຟັງຄວາມຄິດເຫັນຂອງສະມາຊິກສະພາຜູ້ແທນລາດສະດອນແລະສະມາຊິກວຸດທິສະພາ ນາຍົກລັດຖະມົນຕີຈະແຈ້ງຂໍໃຫ້ປະທານລັດຖະສະພາເປີດກອງປະຊຸມລັດຖະສະພາເພື່ອອະພິປາຍປັນຫາຮ່ວມກັນຂອງລັດຖະສະພາກໍ່ໄດ້ ແຕ່ລັດຖະສະພາແມ່ນບໍ່ມີສິດລົງມະຕິໃນປັນຫາທີ່ອະພິປາຍ

## 2.4 ການຕັ້ງຄະນະກຳມາທິການ

**2.4.1 ອຳນາດຂອງວຸດທິສະພາໃນການຕັ້ງຄະນະກຳມາທິການ**

ວຸດທິສະພາມີອຳນາດເລືອກສະມາຊິກວຸດທິສະພາ ຕັ້ງເປັນຄະນະກຳມາທິການສາມັນ ແລະມີອຳນາດເລືອກບຸກຄົນທີ່ເປັນຫຼືບໍ່ເປັນສະມາຊິກ ຕັ້ງເປັນຄະນະກຳມາທິການວິສາມັນ ເພື່ອເຮັດກິດຈະການ ພິຈາລະນາ ສອບສວນ ຫຼືສຶກສາເລື່ອງອັນຢູ່ໃນອຳນາດໜ້າທີ່ຂອງວຸດທິສະພາແລ້ວຣາຍງານຕໍ່ວຸດທິສະພາ ມະຕິແຕ່ງຕັ້ງຄະນະກຳມາທິການ ສາມັນນັ້ນຕ້ອງແຈ້ງວຽກຫຼືເລື່ອງໃຫ້ຊັດເຈນ ແລະບໍ່ຊ້ຳຫຼືຊ້ອນກັນ

**2.4.2 ອຳນາດຂອງຄະນະກຳມາທິການ**

ຄະນະກຳມາທິການທີ່ວຸດທິສະພາມີມະຕິແຕ່ງຕັ້ງຂຶ້ນ ມີອຳນາດອອກຄຳສັ່ງຮຽກເອກະສານຈາກບຸກຄົນຫຼືຮຽກບຸກຄົນມາຊີ້ແຈງ ຖະແຫຼງຂໍ້ຄວາມ ຫຼືສະແດງຄວາມເຫັນໃນກິດຈະການທີ່ເຮັດ ຫຼືໃນເລື່ອງທີ່ພິຈາລະນາສອບສວນຢູ່ນັ້ນໄດ້ ຄຳສັ່ງຮຽກດັ່ງກ່າວມີຜົນບັງຄັບຕາມທີ່ກົດໝາຍກຳໜົດແຕ່ບໍ່ໃຫ້ບັງຄັບກັບຜູ້ພິພາກສາ ຫຼືຕຸລາການທີ່ເຮັດວຽກຕາມສິດອຳນາດໃນກະບວນການພິຈາລະນາຕັດສິນຄະດີ ຫຼືການບໍລິຫານງານບຸກຄົນຂອງແຕ່ລະສານ ແລະບໍ່ໃຫ້ໃຊ້ບັງຄັບກັບຜູ້ກວດກາແຜ່ນດິນ ຫຼືກຳມະການໃນອົງການອິດສະຫຼະຕາມລັດຖະທຳມະນູນທີ່ໄດ້ເຮັດວຽກ ໂດຍກົງໃນອົງກອນຕາມສິດອຳນາດຕາມທີ່ລັດຖະທຳມະນູນ ຫຼືພະລາດຊະບັນຫຍັດປະກອບລັດຖະທຳມະນູນກຳໜົດ

ຫາກບຸກຄົນທີ່ຄະນະກຳມາທິການອອກຄຳສັ່ງຮຽກໃຫ້ມາຊີ້ແຈງຖະແຫຼງຂໍ້ຄວາມ ຫຼືສະແດງຄວາມເຫັນນັ້ນ ແມ່ນເປັນຂ້າລາດຊະການ ພະນັກງານ ຫຼືລູກຈ້າງຂອງໜ່ວຍງານລາດຊະການ ໜ່ວຍງານຂອງລັດ ລັດຖະວິສາຫະກິດ ຫຼືລາດຊະການສ່ວນທ້ອງຖິ່ນ ປະທານຄະນະກຳມາທິການຕ້ອງແຈ້ງໃຫ້ລັດຖະມົນຕີທີ່ບັງຄັບບັນຊາຫຼືກຳກັບດູແລໜ່ວຍງານທີ່ບຸກຄົນນັ້ນດຳເນີນການດັ່ງກ່າວ ເວັ້ນແຕ່ແມ່ນເປັນເລື່ອງກ່ຽວກັບຄວາມໝັ້ນຄົງ ຄວາມສະຫງົບຮຽບຮ້ອຍ ຫຼືຜົນປະໂຫຍດຂອງປະເທດ ໃຫ້ຖືເປັນຂໍ້ຍົກເວັ້ນ

**2.4.3 ເອກກະສິດ**

ໃນກອງປະຊຸມຄະນະກຳມາທິການ ບຸກຄົນທີ່ກ່ຽວຂ້ອງກັບກອງປະຊຸມຈະກ່າວຄຳເວົ້າເພື່ອຖະແຫຼງ ຂໍ້ຄວາມ ສະແດງຄວາມຄິດເຫັນ ຫຼືອອກສຽງລົງຄະແນນ ໃຫ້ຖືເປັນເອກກະສິດເດັດຂາດ ຜູ້ໃດຈະເອົາໄປອ້າງເປັນເຫດຟ້ອງຮ້ອງວ່າກ່າວບໍ່ໄດ້

# 3. ສິດແລະອຳນາດໃນການໃຫ້ຄວາມເຫັນຊອບເລື່ອງສຳຄັນ

ອີງໃສ່ລັດຖະທຳມະນູນ ປີ 2008 (ພ.ສ.2550) ລັດຖະສະພາແມ່ນມີສິດແລະອຳນາດໃນການໃຫ້ຄວາມເຫັນຊອບໃນເລື່ອງທີ່ມີຄວາມສຳຄັນ ແລະວຸດທິສະພາທີ່ແມ່ນເປັນອົງກອນໜຶ່ງທີ່ປະກອບສ່ວນເປັນລັດຖະສະພາ ຈຶ່ງຍ່ອມມີສິດແລະອຳນາດໃນການເຮັດວຽກດັ່ງກ່າວ ດັ່ງນີ້

## 3.1 ການໃຫ້ຄວາມເຫັນຊອບໃນການແຕ່ງຕັ້ງຜູ້ສຳເລັດລາດຊະການແທນເຈົ້າຊີວິດ

3.1.1 **ຫາກເຈົ້າຊີວິດບໍ່ໄດ້ແຕ່ງຕັ້ງຜູ້ສຳເລັດລາດຊະການແທນຫຼືເຈົ້າຊີວິດບໍ່ສາມາດແຕ່ງຕັ້ງໄດ້** ຍ້ອນວ່າຍັງບໍ່ທັນບັນລຸນິຕິພາວະຫຼືຍ້ອນເຫດອື່ນ ຄະນະອົງຄະມົນຕີຕ້ອງສະເໜີຊື່ຜູ້ໃດຜູ້ໜຶ່ງທີ່ສົມຄວນຢູ່ໃນຕຳແໜ່ງເປັນຜູ້ສຳເລັດລາດຊະການແທນເຈົ້າຊີວິດຕໍ່ລັດຖະສະພາເພື່ອໃຫ້ຮັບຮອງເອົາ ເມື່ອລັດຖະສະພາໃຫ້ຄວາມເຫັນຊອບແລ້ວ ປະທານລັດຖະສະພາຈະປະກາດໃນນາມຂອງເຈົ້າຊີວິດ ແຕ່ງຕັ້ງຜູ້ນັ້ນເປັນຜູ້ສຳເລັດລາດຊະການແທນເຈົ້າຊີວິດ

3.1.2 **ຫາກສະພາຜູ້ແທນລາດສະດອນໝົດອາຍຸການຫຼືຖືກຍຸບ** ໃຫ້ວຸດທິະສາພາແມ່ນເຮັດວຽກຕາງໜ້າລັດຖະສະພາໃນການຮັບຮອງເອົາການແຕ່ງຕັ້ງຜູ້ສຳເລັດລາດຊະການແທນເຈົ້າຊີວິດ

## 3.2 ການຮັບຮູ້ການແກ້ໄຂເພີ່ມຕື່ມກົດມົນທຽນບານວ່າດ້ວຍການສືບລາດຊະສັນຕິວົງ

3.2.1 **ການແກ້ໄຂເພີ່ມຕື່ມກົດມົນທຽນບານວ່າດ້ວຍການສືບລາດຊະສັນຕິວົງເປັນພະລາດຊະອຳນາດຂອງເຈົ້າຊີວິດໂດຍສະເພາະ** ເມື່ອມີພະລາດຊະດຳລິແລ້ວ ຄະນະອົງຄະມົນຕີຈະສ້າງຮ່າງກົດມົນທຽນບານວ່າດ້ວຍການສືບລາດຊະສັນຕິວົງຂຶ້ນຖະຫວາຍເພື່ອໃຫ້ເຈົ້າຊີວິດຕັດສິນໃຈ ເມື່ອເຈົ້າຊີວິດເຫັນຊອບແລະລົງຊື່ແລ້ວ ປະທານອົງຄະມົນຕີຈະດຳເນີນການແຈ້ງປະທານລັດຖະສະພາເພື່ອໃຫ້ປະທານລັດຖະສະພາແຈ້ງໃຫ້ລັດຖະສະພາຮັບຮູ້ ແລະໃຫ້ປະທານລັດຖະສະພາເປັນຜູ້ລົງຊື່ຮັບລາດຊະໂອງການ ແລະເມື່ອໄດ້ປະກາດນຳໃຊ້ໃນລາດຊະກິດຈານຸເບກສາແລ້ວໃຫ້ມີຜົນສັກສິດເປັນກົດໝາຍໄດ້ຕໍ່ໄປ

3.2.2 **ຫາກສະພາຜູ້ແທນລາດສະດອນໝົດອາຍຸການຫຼືຖືກຍຸບ** ໃຫ້ວຸດທິະສາພາແມ່ນເຮັດວຽກຕາງໜ້າລັດຖະສະພາໃນການຮັບຮອງເອົາການແຕ່ງຕັ້ງຜູ້ສຳເລັດລາດຊະການແທນເຈົ້າຊີວິດ

## 3.3 ການຮັບຮູ້ຫຼືການຮັບຮອງເອົາການສືບຕໍ່ລາດຊະສົມບັດ

3.3.1 **ຫາກລາດຊະບັນລັງໄດ້ວ່າງລົງແລະເຈົ້າຊີວິດໄດ້ແຕ່ງຕັ້ງລັດຊະທາຍາດໄວ້ແລ້ວ** ຄະນະລັດຖະມົນຕີຕ້ອງແຈ້ງໃຫ້ປະທານລັດຖະສະພາຮັບຮູ້ແລະປະທານລັດຖະສະພາຕ້ອງຮຽກປະຊຸມລັດຖະສະພາເພື່ອຮັບຮູ້ ປະທານລັດຖະສະພາເປັນຜູ້ເຊີນລັດຊະທາຍາດຂຶ້ນເປັນເຈົ້າຊີວິດສືບຕໍ່ໄປ ແລະປະທານລັດຖະສະພາຕ້ອງເປັນຜູ້ປະກາດໃຫ້ປະຊາຊົນຮັບຮູ້

3.3.1 **ຫາກລາດຊະບັນລັງໄດ້ວ່າງລົງແລະເຈົ້າຊີວິດບໍ່ໄດ້ແຕ່ງຕັ້ງລັດຊະທາຍາດໄວ້** ຄະນະອົງຄະມົນຕີຕ້ອງສະເໜີຊື່ຜູ້ສືບຕໍ່ລາດຊະສົມບັດຕໍ່ຄະນະລັດຖະມົນຕີ ເພື່ອສະເໜີຕໍ່ລັດຖະສະພາເພື່ອໃຫ້ຄວາມເຫັນຊອບ ໂດຍຈະສະເໜີລາດ

ຊະບຸດ (ລູກຊາຍ) ຫຼືລາດຊະທິດາ (ລູກສາວ) ກໍ່ໄດ້ ເມື່ອລັດຖະສະພາໄດ້ຮັບຮອງເອົາແລ້ວ ປະທານລັດຖະ ສະພາເປັນຜູ້ເຊີນລັດຊະທາຍາດຂຶ້ນເປັນເຈົ້າຊີວິດສືບຕໍ່ໄປ ແລະປະທານລັດຖະສະພາຕ້ອງເປັນຜູ້ປະກາດໃຫ້ປະຊາຊົນຮັບຮູ້

**3.3.3 ຫາກສະພາຜູ້ແທນລາດສະດອນໝົດອາຍຸການຫຼືຖືກຍຸບ** ໃຫ້ວຸດທິສະພາແມ່ນເຮັດວຽກຕາງໜ້າລັດຖະສະພາໃນການຮັບຮອງເອົາການແຕ່ງຕັ້ງຜູ້ສຳເລັດລາດຊະການແທນເຈົ້າຊີວິດ

## 3.4 ການຮັບຮອງເອົາການປະກາດສົງຄາມ

**3.4.1 ເຈົ້າຊີວິດແມ່ນມີສິດອຳນາດໃນການປະກາດສົງຄາມຫາກໄດ້ຮັບການຮັບຮອງຈາກລັດຖະສະພາ** ມະຕິຮັບຮອງເອົາຂອງລັດຖະສະພາຕ້ອງມີຄະແນນສຽງບໍ່ໜ້ອຍກວ່າ 2 ໃນ 3 ຂອງ ຈຳນວນສະມາຊິກທີ່ມີຢູ່ທັງໝົດຂອງທັງ 2 ສະພາ

**3.4.2 ຫາກສະພາຜູ້ແທນລາດສະດອນໝົດອາຍຸການຫຼືຖືກຍຸບ** ໃຫ້ວຸດທິສະພາແມ່ນເຮັດວຽກຕາງໜ້າລັດຖະສະພາໃນການຮັບຮອງເອົາການແຕ່ງຕັ້ງຜູ້ສຳເລັດລາດຊະການແທນເຈົ້າຊີວິດ

## 3.5 ການຮັບຮອງເອົາໜັງສືສັນຍາ

ເຈົ້າຊີວິດແມ່ນມີອຳນາດໃນການເຮັດໜັງສືສັນຍາສັນຕິພາບ ສັນຍາສະຫງົບສຸກ ແລະສັນຍາອື່ນກັບສາກົນຫຼືກັບອົງກອນລະຫວ່າງປະເທດ ສັນຍາທີ່ມີບົດປ່ຽນແປງອານາເຂດ ຫຼືເຂດພື້ນທີ່ນອກອານາເຂດ ທີ່ປະເທດໄທມີສິດອະທິປະໄຕ ຫຼືມີເຂດອຳນາດຕາມໜັງສືສັນຍາ ຫຼືຕາມກົດໝາຍລະຫວ່າງປະເທດ ຫຼືຈະຕ້ອງອອກພະລາດຊະບັນຫຍັດເພື່ອໃຫ້ການເປັນໄປຕາມໜັງສືສັນຍາ ຫຼືມີຜົນຕໍ່ຄວາມໝັ້ນຄົງທາງເສດຖະກິດຫຼືສັງຄົມຂອງປະເທດຢ່າງກວ້າງຂວາງ ຫຼືມີຜົນຜູກພັນທາງດ້ານການຄ້າ ການລົງທຶນ ຫຼືງົບປະມານຂອງປະເທດ ໂດຍແມ່ນຕ້ອງໄດ້ຮັບການຮັບຮອງເອົາຈາກລັດຖະສະພາກ່ອນ ແລະລັດຖະສະພາຕ້ອງພິຈາລະນາໃຫ້ແລ້ວໃນ 60 ມື້ ນັບແຕ່ມື້ທີ່ໄດ້ຮັບເລື່ອງ

ກ່ອນເຮັດໜັງສືສັນຍາກັບນານາປະເທດ ຫຼືອົງການລະຫວ່າງປະເທດ ຄະນະລັດຖະມົນຕີຕ້ອງໃຫ້ຂໍ້ມູນແລະຈັດໃຫ້ມີການຮັບຟັງຄວາມຄິດເຫັນຂອງປະຊາຊົນ ແລະຕ້ອງຊີ້ແຈງຕໍ່ລັດຖະສະພາ ກ່ຽວກັບໜັງສືສັນຍານັ້ນ ຮວມທັງຄະນະລັດຖະມົນຕີຕອ້ງສະເໜີຂອບການເຈລະຈາຕໍ່ລັດຖະສະພາເພື່ອໃຫ້ຮັບຮອງເອົາ

## 3.6 ການເຫັນດີຮັບຮອງເອົາ ໃຫ້ພິຈາລະນາຮ່າງລັດຖະທຳມະນູນເພີ່ມຕື່ມ ຫຼື ຮ່າງພະລາດຊະບັນຫຍັດທີ່ລັດຖະສະພາຍັງສ້າງບໍ່ແລ້ວ ຍ້ອນສະພາຜູ້ແທນລາດສະດອນໝົດອາຍຸການຫຼືຖືກຍຸບ

ຫາກແມ່ນສະພາຜູ້ແທນລາດສະດອນໝົດອາຍຸການຫຼືຖືກຍຸບ ຫຼັງການເລືອກຕັ້ງສະມາຊິກສະພານຜູ້ແທນລາດສະດອນເປັນການທົ່ວໄປ ລັດຖະສະພາ ສະພາຜູ້ແທນລາດສະດອນ ຫຼືວຸດທິສະພາ ຈະພິຈາລະນາຮ່າງລັດຖະທະມະນູນແກ້ໄຂເພີ່ມຕື່ມຫຼືຮ່າງພະລາດຊະບັນຫຍັດທີ່ລັດຖະສະພາຍັງບໍ່ໄດ້ຮັບຮອງເອົາຕໍ່ໄປໄດ້ ແຕ່ຄະນະລັດຖະມົນຕີທີ່ຕັ້ງຂຶ້ນໃໝ່ຫຼັງການ

ເລືອກຕັ້ງຕ້ອງຮ້ອງຂໍໃນກຳໜົດດັ່ງກ່າວໃຫ້ຖືວ່າຮ່າງລັດຖະທຳມະນູນແກ້ໄຂເພີ່ມຕື່ມ ຫຼືຮ່າງພະລາດຊະບັນຫຍັດເຫຼົ່ານັ້ນເປັນອັນຕົກໄປ

### 3.7 ການຮັບຮອງໃຫ້ປິດສະໄໝກອງປະຊຸມກ່ອນຄົບກຳໜົດ 120 ມື້

ສະໄໝປະຊຸມສາມັນຂອງລັດຖະສະພາສະໄໝໜຶ່ງມີໄລຍະເວລາ 120 ມື້ ແຕ່ເຈົ້າຊີວິດຈະໃຫ້ຂະຫຍາຍອອກໄປອີກກໍ່ໄດ້ ຕາມຂໍ້ສະເໜີຂອງຄະນະລັດຖະມົນຕີ

ແຕ່ການເປີດສະໄໝກອງປະຊຸມສະໄໝສາມັນກ່ອນຄົບກຳໜົດ 120 ມື້ ຈະເຮັດໄດ້ໂດຍຄວາມເຫັນດີຮັບຮອງເອົາຂອງລັດຖະມົນຕີເທົ່ານັ້ນ

# 4. ສິດອຳນາດໃນການຮັບຮອງເອົາ ໃຫ້ຄຳແນະນຳ ຫຼືການເລືອກບຸກຄົນໃຫ້ເຂົ້າສູ່ຕຳແໜ່ງຕາມທີ່ກຳໜົດໄວ້ໃນລັດຖະທຳມະນູນ

ບົດບາດແລະສິດອຳນາດຂອງວຸດທິສະພາກ່ຽວກັບການຮັບຮອງເອົາ ໃຫ້ຄຳແນະນຳ ຫຼືການເລືອກ ບຸກຄົນໃຫ້ເຂົ້າສູ່ຕຳແໜ່ງຕາມທີ່ກຳໜົດໄວ້ໃນລັດຖະທຳມະນູນ ມີ 3 ປະເພດ ດັ່ງນີ້

**4.1 ການຮັບຮອງເອົາແລະຖະຫວາຍຄຳແນະນຳ** ເພື່ອໃຫ້ເຈົ້າຊີວິດແຕ່ງຕັ້ງບຸກຄົນເຂົ້າສູ່ຕຳແໜ່ງ ດັ່ງນີ້

- ປະທານສານລັດຖະທຳມະນູນແລະຕຸລາການສານລັດຖະທຳມະນູນ ຈຳນວນ 9 ທ່ານ ໂດຍວຸດທິສະພາຕ້ອງຮັບຮອງເອົາຜູ້ມີຄຸນນະວຸດສາຂານິຕິສາດ ຊຶ່ງມີຄວາມຮູ້ຄວາມຊ່ຽວຊານທາງດ້ານກົດໝາຍຢ່າງສູງແລະໄດ້ຮັບເລືອກ ຈຳນວນ 2 ທ່ານ ແລະຜູ້ມີຄຸນນະວຸດສາຂາລັດຖະສາດ ລັດຖະປະສາດສະນະສາດ (Public Administration) ຫຼືສັງຄົມສາດອື່ນ ຊຶ່ງມີຄວາມຮູ້ຄວາມຊ່ຽວຊານທາງດ້ານການບໍລິຫານລາດຊະການແຜ່ນດິນຢ່າງສູງແລະໄດ້ຮັບເລືອກ ຈຳນວນ 2 ທ່ານ

- ກຳມະການການເລືອກຕັ້ງ ຈຳນວນ 5 ທ່ານ ປະກອບສ່ວນດ້ວຍປະທານກຳມາະການ 1 ທ່ານ ແລະກຳມະການອື່ນ 4 ທ່ານ

- ຜູ້ກວດກາແຜ່ນດິນ ຈຳນວນ 3 ທ່ານ ປະກອບສ່ວນດ້ວຍ ປະທານຜູ້ກວດກາແຜ່ນດິນ 1 ທ່ານ ແລະຜູ້ກວດກາແຜ່ນດິນອື່ນອີກ 2 ທ່ານ

- ກຳມະການປ້ອງກັນແລະປາບປາມການທຸດຈະຫຼິດແຫ່ງຊາດ ຈຳນວນ 9 ທ່ານ ປະກອບສ່ວນດ້ວຍ ປະທານກຳມະການ 1 ທ່ານ ແລະກຳມະການອື່ນອີກ 8 ທ່ານ

- ກຳມະການກວດເງິນແຜ່ນດິນ ຈຳນວນ 7 ທ່ານ ແລະຜູ້ວ່າການກວດເງິນແຜ່ນດິນ ຊຶ່ງ ວຸດທິສະພາຕ້ອງໄດ້ຮັບຮອງເອົາ

- ກຳມະການສິດທິມະນຸດຊົນ ຈຳນວນ 7 ທ່ານ ປະກອບສ່ວນດ້ວຍ ປະທານກຳມະການ 1 ທ່ານ ແລະກຳມະການອື່ນອີກ 6 ທ່ານ

### 4.2 ການຮັບຮອງເອົາຮ່ວມກັບອົງກອນອື່ນ

**4.2.1 ແມ່ນຕ້ອງໄດ້ຮັບຮອງເອົາຈາກຄະນະກຳມະການຕຸລາການສານປົກຄອງກ່ອນ**

- ຮັບຮອງເອົາຜູ້ມີຄຸນນະວຸດສາຂານິຕິສາດແລະຜູ້ມີຄຸນນະວຸດໃນການບໍລິຫານລາດຊະການແຜ່ນດິນເປັນຕຸລາການໃນສານປົກຄອງສູງສຸດຈຳນວນບໍໜ້ອຍກວ່າ 1 ໃນ 3 ຂອງຕຸລາການໃນສານປົກຄອງສູງສຸດທັ້ງໝົດ

- ການແຕ່ງຕັ້ງປະທານສານປົກຄອງສູງສຸດ

**4.2.2 ແມ່ນຕ້ອງໄປຕາມມະຕິເຫັນດີຂອງຄະນະກຳມະການໄອຍະການກ່ອນ**

- ການແຕ່ງຕັ້ງແລະການໃຫ້ໄອຍະການສູງສຸດພົ້ນຈາກຕຳແໜ່ງ

**4.2.3 ແມ່ນຕ້ອງໄດ້ຮັບຮອງເອົາຂາກຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫຼິດແຫ່ງຊາດກ່ອນ**

- ການແຕ່ງຕັ້ງເລຂາທິການຄະນະກຳມະການປ້ອງກັນແລະປາບປາມການທຸຈະຫຼິດແຫ່ງຊາດ

### 4.3 ການພິຈາລະນາເລືອກ

- ກຳມະການຜູ້ມີຄຸນນະວຸດໃນຄະນະກຳມະການຕຸລາການສານຍຸຕິທຳ ຈຳນວນ 2 ທ່ານ

- ກຳມະການຜູ້ມີຄຸນນະວຸດໃນຄະນະກຳມະການຕຸລາການສານປົກຄອງ ຈຳນວນ 2 ທ່ານ

ໃນການພິຈາລະນາໃຫ້ບຸກຄົນເຂົ້າສູ່ຕຳແໜ່ງຕາມທີ່ລັດຖະທຳມະນູນກຳໜົດ ໃຫ້ວຸດທິສະພາແຕ່ງຕັ້ງຄະນະກຳມະການຂຶ້ນຄະນະໜຶ່ງ ແມ່ນໃຫ້ມີໜ້າທີ່ກວດສອບປະຫວັດ ຄວາມປະພຶດ ແລະຈະລິຍະທຳຂອງຜູ້ໄດ້ຮັບການສະເໜີຊື່ໃຫ້ເຂົ້າສູ່ຕຳແໜ່ງນັ້ນ ຮວມທັ້ງຮວບຮວມພະຍານຫຼັກຖານອັນຈຳເປັນ ແລ້ວຣາຍງານຕໍ່ວຸດທິສະພາເພື່ອປະກອບການພິຈາລະນາຕໍ່ໄປ ທັ້ງນີ້ການເຮັດວຽກຂອງຄະນະກຳມາທິການຊຸດນີ້ແມ່ນໃຫ້ອີງໃສ່ຂໍ້ບັງຄັບການປະຊຸມວຸດທິສະພາ

## 5. ສິດແລະອຳນາດຖອດຖອນບຸກຄົນອອກຈາກຕຳແໜ່ງ

### 5.1 ເຫດແມ່ນໃຫ້ຖືກຖອດຖອນອອກຈາກຕຳແໜ່ງ

1) ມີພຶດຕິກຳຮັ່ງມີໄວຫຼາຍກວ່າປົກຕິ

2) ສໍ່ໄປໃນທາງເຮັດທຸດຈະຫຼິດຕໍ່ໜ້າທີ່

3) ສໍ່ວ່າເຮັດຜິດຕໍ່ໜ້າທີ່ລາດຊະການ

4) ສໍ່ວ່າເຮັດຜິດໜ້າທີ່ໃນການຍຸຕິທຳ

5) ສໍ່ວ່າຈົງໃຈໃຊ້ອຳນາດຂັດຕໍ່ລັດຖະທຳມະນູນ ຫຼືກົດໝາຍ

6) ຝ່າຝືນຫຼືບໍ່ປະຕິບັດຈາມມາດຕະການທາງຈະລິຍະທຳຢ່າງຮ້າຍແຮງ

## 5.2 ຕຳແໜ່ງທີ່ແມ່ນອາດຖືກຖອດ

1) ນາຍົກລັດຖະມົນຕີ

2) ລັດຖະມົນຕີ

3) ສະມາຊິກສະພາຜູ້ແທນລາດສະດອນ

4) ສະມາຊິກວຸດທິສະພາ

5) ປະທານສານຍຸຕິທຳສູງສຸດ (ສານດີກາ)

6) ປະທານສານລັດຖະທຳມະນູນ

7) ປະທານສານປົກຄອງສູງສຸດ

8) ໄອຍະການສູງສຸດ

9) ຕຸລາການສານລັດຖະທຳມະນູນ

10) ກຳມະການການເລືອກຕັ້ງ

11) ຜູ້ກວດກາແຜ່ນດິນ

12) ກຳມະການກວດເງິນແຜ່ນດິນ

13) ຜູ້ພິພາກສາຫຼືຕຸລາການ

14) ພະນັກງານໄອຍະການ

15) ຜູ້ຢູ່ໃນຕຳແໜ່ງຂັ້ນສູງຕາມພະລາດຊະບັນຫຍັດປະກອບລັດຖະທຳມະນູນວ່າດ້ວຍການປ້ອງກັນແລະປາບປາມການທຸດຈະຫຼິດ ປະກອບດ້ວຍ ຫົວໜ້າໜ່ວຍລາດຊະການຂັ້ນກົມ ທະບວງ ຫຼືກະຊວງ ສຳຫັບຂ້າລາດຊະການພົນລະເຮືອນ ຜູ້ບັນຊາການເຫລ່າທັບ ຫຼືຜູ້ບັນຊາການທະຫານສູງສຸດ ສຳຫຼັບຂ້າລາດຊະການທະຫານ ຜູ້ບັນຊາການຕຳຫຼວດແຫ່ງຊາດ ປະຫຼັດກຸງເທບມະຫານະຄອນ ກຳມະການຫຼືຜູ້ບໍລິຫານສູງສຸດຂອງລັດຖະວິສາຫະກິດ ຫົວໜ້າໜ່ວຍງານອິດສະຫຼະຕາມລັດຖະທຳມະນູນທີ່ເປັນນິຕິບຸກຄົນ

## 5.3 ຜູ້ມີສິດຍື່ນຄຳຮ້ອງໃຫ້ຖອດອອກ

1) ສະມາຊິກສະພາຜູ້ແທນລາດສະດອນຈຳນວນບໍ່ໜ້ອຍກວ່າ 1 ໃນ 4 ຂອງຈຳນວນທັ້ງໝົດ

2) ປະຊາຊົນຜູ້ມີສິດເລືອກຕັ້ງຈຳນວນບໍ່ໜ້ອຍກວ່າ 20,000 ຄົນ

3) ສະມາຊິກວຸດທິສະພາຈຳນວນບໍ່ໜ້ອຍກວ່າ 1 ໃນ 4 ຂອງຈຳນວນທັ້ງໝົດ

ແມ່ນມີສິດເຂົ້າຊື່ຮ້ອງຂໍຕໍ່ປະທານວຸດທິສະພາເພື່ອໃຫ້ວຸດທິສະພາ ມີມະຕິຖອດອອກຈາກຕຳແໜ່ງໄດ້

## 5.4 ຂະບວນການຖອດຖອນບຸກຄົນອອກຈາກຕຳແໜ່ງ

ເມື່ອໄດ້ຮັບການຮ້ອງຂໍແລ້ວ ປະທານວຸດທິສະພາຕ້ອງສົ່ງເລື່ອງໃຫ້ຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດດຳເນີນການໄຕ່ສວນໃຫ້ແລ້ວໂດຍເຮັວ ແລະເມື່ອໄຕ່ສວນແລ້ວໃຫຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດເຮັດຣາຍງານສະເໜີຕໍ່ວຸດທິສະພາ ໂດຍຣາຍງານນີ້ຕ້ອງມີຂໍ້ຄວາມຂໍ້ກ່າວຫາຕາມຄຳຮ້ອງມີເຄົ້າມີເຫດຫຼືບໍ່ ມີພະຍານຫຼັກຖານອັນໃດເຊື່ອຖືໄດ້ແດ່ ຣວມທັ້ງ ຈະໃຫ້ວຸດທິສະພາເຮັດແນວໃດ ຫາກຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດເຫັນວ່າເປັນເລື່ອງສຳຄັນ ຈະແຍກເຮັດຣາຍງານສະເພາະຂໍ້ອະທິບາຍເຄົ້າເຫດອັນນ່າເຊື່ອຖືໄດ້ວ່າເຮັດຜິດໄປໃຫ້ປະທານວຸດທິສະພາພິຈາລະນາກ່ອນກໍ່ໄດ້

ຫາກຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດ ມີມະຕິດ້ວຍຄະແນນສຽງບໍ່ໜ້ອຍກວ່າເຄິ່ງໜຶ່ງຂອງຄະນະກຳມະການທັ້ງໝົດວ່າມີເຄົ້າເຫດນ່າເຊື່ອຖືວ່າເຮັດຜິດ ໃຫ້ຜູ້ຖືກກ່າວຫາຫຍຸດເຮັດວຽກນັບແຕ່ມຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດລົງມະຕິ ຈົນກວ່າຈະຮອດມື້ວຸດທິສະພາລົງມະຕິ ປະທານຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດຕ້ອງສົ່ງຣາຍງານແລະເອກະສານທີ່ມີຢູ່ ພ້ອມທັ້ງຄວາມຄິດຄວາມເຫັນໄປໃຫ້ປະທານວຸດທິສະພາເພື່ອໃຫ້ວຸດທິສະພາດຳເນີນການພິຈາລະນາ ແລະໄອຍະການສູງສຸດ ເພື່ອໃຫ້ດຳເນີນການປ້ອງຕໍ່ສານຍຸຕິທຳສູງສຸດ (ດີກາ) ຜະແໜກຄະດີອາຍາຂອງຜູ້ຢູ່ໃນຕຳແໜ່ງທາງການເມືອງຕໍ່ໄປ ແຕ່ຫາກຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດເຫັນວ່າຄຳກ່າວຫານັ້ນບໍ່ມີເຄົ້າມີເຫດນ່າເຊື່ອຖືໃຫ້ຂໍ້ກ່າວຫານັ້ນເປັນອັນຕົກໄປ

ເມື່ອໄດ້ຮັບຣາຍງານແລ້ວ ປະທານວຸດທິສະພາຕ້ອງຈັດໃຫ້ມີກອງປະຊຸມວຸດທິສະພາ ເພື່ອພິຈາລະນາເຫດດັ່ງກ່າວນີ້ໂດຍເຮັວ ຫາກຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດສົ່ງຣາຍງານມານອກສະໄໝກອງປະຊຸມ ປະທານວຸດທິສະພາຕ້ອງແຈ້ງໃຫ້ປະທານລັດຖະສະພາຮັບຮູ້ເພື່ອດຳເນີນການໃຫ້ມີການຮຽກເປີດກອງປະຊຸມລັດຖະສະພາສະໄໝວິສາມັນໂດຍເຮັວ

ການລົງຄະແນນໃຫ້ລົງຢ່າງປິດລັບແລະເປັນອິດສະຫຼະ ມະຕິໃຫ້ຖອດຜູ້ໃດອອກຈາກຕຳແໜ່ງຕ້ອງມີສຽງບໍ່ໜ້ອຍວ່າ 3 ໃນ 5 ຂອງຈຳນວນສະມາຊິກທັ້ງໝົດທີ່ມີຢູ່ ມະຕິວຸດທິສະພາຖືເປັນອັນສິ້ນສຸດແລະຈະມີການຮ້ອງຂໍໃຫ້ຖອດຜູ້ໃດອອກຈາກຕຳແໜ່ງຍ້ອນເຫດເກົ່າອີກບໍ່ໄດ້ ການຕັດສິນຂອງວຸດທິສະພາແມ່ນຖືວ່າບໍ່ກະທົບກະເທືອນການພິຈາລະນາຂອງຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດ

ຫາກແມ່ນຜູ້ຖືກກ່າວຫານັ້ນເປັນຄະນະກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດ ຍ້ອນວ່າເຮັດວຽກຂາດຄວາມທ່ຽງທຳ ຈົງໃຈຝ່າຝືນລັດຖະທຳມະນູນຫຼືກົດໝາຍ ຫຼືສ່ວາຂະເຮັດວຽກແລ້ວເສື່ອມເສຍກຽກຂອງຕຳແໜ່ງຢ່າງຮ້າຍແຮງ ວຸດທິສະພາຕ້ອງມີມະຕິຖອດກຳມະການປ້ອງກັນແລະປາບປາມການທຸດຈະຫິດແຫ່ງຊາດບຸກຄົນນັ້ນອອກຈາກຕຳແໜ່ງດ້ວຍຄະແນນສຽງບໍ່ໜ້ອຍກວ່າ 3 ໃນ 4 ຂອງຈຳນວນສະມາຊິກທັ້ງໝົດ

### 5.5 ຜົນຂອງການຖືກຖອດອອກຈາກຕຳແໜ່ງ

ຜູ້ໃດທີ່ຖືກຖອດອອກຈາກຕຳແໜ່ງ ໃຫ້ອອກຈາກຕຳແໜ່ງຫຼືໜ້າທີ່ລາດຊະການທັນທີ ນັບຈາກມື້ທີ່ມີມະຕິຖອດອອກ ແລະຕັດສິນບໍ່ໃຫ້ເຂົ້າສູ່ຕຳແໜ່ງທາງການເມືອງ ຫຼືຮັບລາດຊະການເປັນເວລາ 5 ປີ

# 6. ສິດແລະອຳນາດອື່ນ

## 6.1 ການພິຈາລະນາເຣື່ອງສຳຄັນ

### 6.1.1 ສິດແລະອຳນາດຂອງວຸດທິສະພາໂດຍສະເພາະ

- ສ້າງຂໍ້ບັງຄັບການປະຊຸມວຸດທິສະພາ

- ພິຈາລະນາອະນຸຍາດຫຼືບໍ່ອະນຸຍາດໃຫ້ສອບສວນສະມາຊິກວຸດທິສະພາໃນຖານະເປັນຜູ້ຕ້ອງຫາໃນຄະດີອາຍາໃນລະຫວ່າງເປີດສະໄໝກອງປະຊຸມ ຫຼືຫາກສະມາຊິກວຸດທິສະພາຖືກຈັບບວມກຳລັງເຮັດຜິດໃຫ້ຣາຍງານຕໍ່ວຸດທິສະພາໂດຍທັນທີ ແລະປະທານວຸດທິສະພາອາດສັ່ງໃຫ້ປ່ອຍໄດ້

- ພິຈາລະນາອະນຸຍາດຫຼືບໍ່ອະນຸຍາດໃຫ້ສານພິຈາລະນາຄະດີທີ່ສະມາຊິກວຸດທິສະພາເປັນຈຳເລີຍໃນຄະດີອາຍາຫຼືຄະດີອັນກ່ຽວກັບພະລາດຊະບັນຫຍັດປະກອບລັດຖະທຳມະນູນສະເພາະທີ່ຈຳເປັນເພື່ອປະໂຫຍດ ໃນການຈັດໃຫ້ມີການເລືອກຕັ້ງໃນລະຫວ່າງເປີດສະໄໝກອງປະຊຸມ

- ຂໍເປີດກອງປະຊຸມລັດຖະສະພາສະໄໝວິສາມັນ ໂດຍເຂົ້າຊື່ຮ່ວມກັບສະມາຊິກສະພາຜູ້ແທນລາດສະດອນ

- ປະທານວຸດທິສະພາມີອຳນາດຮ້ອງຂໍໃຫ້ພະນັກງານສອບສວນ ຫຼືສານສັ່ງປ່ອຍສະມາຊິກວຸດທິສະພາທີ່ໄດ້ຖືກຄຸມຂັງໃນລະຫວ່າງສອບສວນຫຼືພິຈາລະນາຄະດີຢູ່ກ່ອນເປີດສະໄໝກອງປະຊຸມ

ເມື່ອມື້ເປີດສະໄໝກອງປະຊຸມໄດ້ມາຮອດແລ້ວ

- ປະທານວຸດທິສະພາຕ້ອງຈັດໃຫ້ມີການບັນທຶກການອອກສຽງລົງຄະແນນຂອງສະມາຊິກແຕ່ລະທ່ານແລະເປີດເຜີຍບັນທຶກດັ່ງກ່າວ ຍກເວັ້ນແຕ່ເປັນການອອກສຽງລົງຄະແນນລັບ

- ປະທານວຸດທິສະພາແມ່ອາກໃຫ້ຄຳປຶກສາແກ່ນາຍົກລັດຖະມົນຕີໃນການໃຫ້ມີການລົງປະຊາມະຕິໃນກິດຈະການທີ່ອາດກະທົບຕໍ່ຜົນປະໂຫຍດຂອງປະເທດຊາດຫຼືປະຊາຊົນ

- ປະທານວຸດທິສະພາຕ້ອງຈັດໃຫ້ມີການໂຄສະນາຄຳຊີ້ແຈງຕາມທີ່ບຸກຄົນອື່ນອັນບໍ່ແມ່ນລັດຖະມົນຕີຫຼືສະມາຊິກສພາທີ່ໄດ້ຮັບຄວາມເສຍຫາຍຂາກການຖືກກ່າວອ້າງພາດພິງ ໂດຍສະມາຊິກວຸດທິສະພາຮ້ອງຂໍ

**6.1.2 ວຸດທິສະພາເປີດກອງປະຊຸມຮ່ວມກັບສະພາຜູ້ແທນລາດສະດອນຫຼືການເປີດກອງປະຊຸມລັດຖະສະພາ**

- ຮັບຮອງເອົາການແຕ່ງຕັ້ງຜູ້ສຳເລັດລາດຊະການແທນເຈົ້າຊີວິດ
- ຮັບຟັງການປະຕິຍານຕົນຂອງຜູ້ສຳເລັດລາດຊະການແທນເຈົ້າຊີວິດຕໍ່ລັດຖະສະພາ
- ຮັບຮູ້ການແກ້ໄຂເພີ່ມຕື່ມກົດມົນທຽນບານວ່າດ້ວຍການສືບຕໍ່ລາດໍະສັນຕິວົງ ປີ 1924
- ຮັບຮູ້ ຫຼືຮັບຮອງເອົາການສືບຕໍ່ລາດຊະສົມບັດ
- ມີມະຕິໃຫ້ລັດຖະສະພາພິຈາລະນາເລື່ອງອື່ນໃນກອງປະຊຸມສະໄໝສາມັນນິຕິບັນຫຍັດໄດ້
- ຮັບຮອງໃຫ້ປິດສະໄໝກອງປະຊຸມ
- ເປີດປະຊຸມລັດຖະສະພາ
- ສ້າງຂໍ້ບັງຄັບການປະຊຸມລັດຖະສະພາ
- ຮັບຮອງເອົາໃຫ້ພິຈາລະນາຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນຫຼືຮ່າງພະລາດຊະບັນຫຍັດ
- ປຶກສາຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນຫຼືຮ່າງພະລາດຊະບັນຫຍັດໃໝ່
- ຮັບຮອງເອົາໃຫ້ພິຈາລະນາຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນຫຼືຮ່າງພະລາດຊະບັນຫຍັດໃໝ່
- ຮັບຮອງເອົາໃຫ້ພິຈາລະນາຮ່າງພະລາດຊະບັນຫຍັດແກ້ໄຂເພີ່ມຕື່ມ ຮ່າງພະລາດຊະບັນຫຍັດປະກອບລັດຖະທຳມະນູນ ຫຼືຮ່າງພະລາດຊະບັນຫຍັດຕໍ່ໄປ
- ຮັບຟັງການຖະແຫຼງນະໂຍບາຍ
- ເປີດອະພິປາຍທົ່ວໄປ
- ຮັບຮອງເອົາການປະກາດສົງຄາມ
- ຮັບຟັງຄຳຊີ້ແຈງແລະການໃຫ້ຄວາມເຫັນຊອບໜັງສືສັນຍາ
- ແກ້ໄຂເພີ່ມຕື່ມລັດຖະທຳມະນູນ

**6.1.3 ວຸດທິສະພາດເຮັດວຽກຕາງໜ້າລັດຖະສະພາຍ້ອນສະພາຜູ້ແທນລາດສະດອນໝົດອາຍຸການຫຼືຖືກຍຸບ**

- ຮັບຮອງເອົາການແຕ່ງຕັ້ງຜູ້ສຳເລັດລາດຊະການແທນເຈົ້າຊີວິດ
- ຮັບຟັງການປະຕິຍານຕົນຂອງຜູ້ສຳເລັດລາດຊະການແທນເຈົ້າຊີວິດຕໍ່ລັດຖະສະພາ
- ຮັບຮູ້ການແກ້ໄຂເພີ່ມຕື່ມກົດມົນທຽນບານວ່າດ້ວຍການສືບຕໍ່ລາດໍະສັນຕິວົງ ປີ 1924
- ຮັບຮູ້ ຫຼືຮັບຮອງເອົາການສືບຕໍ່ລາດຊະສົມບັດ
- ຮັບຮອງເອົາການປະກາດສົງຄາມ

## 6.2 ພາລະບົດຂອງວຸດທິສະພາໃນອົງການລັດຖະສະພາສາກົນ

ພາລະບົດຂອງວຸດທິສະພາໃນເວທີການເມືອງສາກົນທັງໃນລະດັບໂລກແລະພາກພື້ນ ແມ່ນໄດ້ເຮັດວຽກກັບສະພາຜູ້ແທນລາດສະດອນຕາງໜ້າລັດຖະສະພາໄທ ປະກອບດ້ວຍ 3 ອົງການ ຄື ສະຫະພາບລັດຖະສະພາ (Inter - Parliamentary Union : IPU) ສະຫະພາບສະມາຊິກລັດຖະສະພາອາຊີແລະແປຊິຟິກ (Asian - Pacific Parliamentarians' Union : APPU) ສະມັດຊາລັດຖະສະພາອາຊຽນ (ASEAN - Inter Parliamentary Assembly : AIPA ) ອົງການເຫຼົ່ານີ້ຖືເປັນເຄື່ອງມືທີ່ຈະຊ່ວຍແກ້ໄຂບັນຫາຕ່າງ ໆ ຜ່ານອົງການສາກົນໃນລັກສະໜະການະຊຸມປຶກສາກັນພິຈາລະນາແນວທາງເພື່ອຫາຂໍ້ຍຸດຕິນໍາໄປສູ່ການແກ້ໄຂບັນຫາທີ່ຊັດເຈນ

**ສະຫະພາບລັດຖະສະພາ** (Inter - Parliamentary Union : IPU)

ສະຫະພາບລັດຖະສະພາເປັນອົງການລັດຖະສະພາສາກົນ ສ້າງຕັ້ງໃນປີ 1889 ເປົ້າໝາຍເພື່ອສ້າງສາສັນຕິພາບແລະຄວາມຮ່ວມມືສາກົນ ຊຸກຍູ້ໃຫ້ມີການພົວພັນຢ່າງໃກ້ຊິດລະຫວ່າງສະມາຊິກລັດຖະສະພາຂອງແຕ່ລະປະເທດ ເພື່ອໃຫ້ເກີດຄວາມສາມັກຄີແລະຄວາມເຂົ້າໃຈດີລະຫວ່າງປະຊາຊົນທົ່ວໂລກ ຕອນນີ້ມີສະມາຊິກ 150 ປະເທດ ມີກອງປະຊຸມປີລະ 2 ເທື່ອ ຫ້ອງວ່າການສະຫະພາບລັດຖະສະພາແມ່ນຕັ້ງຢູ່ເຊີແນວ (ເຈນີວາ) ສະວິດ

**ສະຫະພາບສະມາຊິກລັດຖະສະພາອາຊີແລະແປຊິຟິກ** (Asian - Pacific Parliamentarians' Union : APPU)

ສະຫະພາບສະມາຊິກລັດຖະສະພາອາຊີແລະແປຊິຟິກ ແມ່ນເປັນອົງການລັດຖະສະພາສາກົນໃນພາກພື້ນອາຊີແລະແປຊິຟິກ ສ້າງຕັ້ງໃນປີ 1965 ໂດຍການຊຸກຍູ້ຂອງລັດຖະສະພາຍີ່ປຸ່ນ ມີເປົ້າໝາຍເພື່ອຮັກສາເອກະລາດແລະການປົກຄອງແບບປະຊາທິປະໄຕ ເສີມຂະຫຍາຍຄວາມເຂົ້າອົກເຂົ້າໃຈອັນດີແລະຄວາມສາມັກຄີລະຫວ່າງປະເທດໃນພາກພື້ນອາໍແລະແປຊິຟິກ ຊຸກຍູ້ຄວາມຮ່ວມມືທາງເສດຖະກິດ ການແລກປ່ຽນບົດຮຽນທາງວັດທະນະທໍາແລະວິຊາການ ຕອນນີ້ມີສະມາຊິກຈໍານວນ 23 ປະເທດ ໂດຍຈະຈັດໃຫ້ມີກອງປະຊຸມສະມັດຊາໃຫຍ່ ປີລະເທື່ອ ແລະກອງປະຊຸມຄະນະມົນຕີສະຫະພາບສະມາຊິກລັດຖະສະພາອາຊີແລະແປຊິຟິກປີລະເທື່ອໃນຄາວດຽວກັລກອງປະຊຸມສະມັດຊາໃຫຍ່ ຫ້ອງວ່າການສູນທາງສະຫະພາບສະມາຊິກລັດຖະສະພາອາຊີແລະແປຊິຟິກແມ່ນຕັ້ງຢູ່ໂຕກຽວ ປະເທດຍີ່ປຸ່ນ

**ສະມັດຊາລັດຖະສະພາອາຊຽນ** (ASEAN - Inter Parliamentary Assembly : AIPA )

ສະມັດຊາລັດຖະສະພາອາຊຽນ ແມ່ນເປັນອົງການສາກົນໃນພານພື້ນອາຊີຕະເວັນອອກສ່ຽງໃຕ້ ສ້າງຕັ້ງຂຶ້ນໂດຍການຊຸກຍູ້ຂອງລັດຖະສະພາອິນໂດນີເຊັຍໃນປີ 1977 ທໍາອິດແມ່ນໃຊ້ຊື່ວ່າ ອົງການລັດຖະສະພາອາຊຽນ (ASEAN - Inter Parliamentary Organization : AIPO) ແລະໃນປີ 2007 ໄດ້ປັບປຸງໂຄງຮ່າງເປັນສະມັດຊາລັດຖະສະພາອາຊຽນມີເປົ້າໝາຍເພື່ອເສີມຂະຫຍາຍການປະສານຄວາມຮ່ວມມືແລະຄວາມເຂົ້າອົກເຂົ້າໃຈອັນດີລະຫວ່າງລັດຖະສະພາຂອງກຸ່ມປະເທດອາຊຽນ ໂດຍແມ່ນມີຫ້ອງວ່າການປະຈໍາຂອງອົງການຕັ້ງຢູ່ຢາກາຕາ ປະເທດອິນໂດນີເຊັຍ

ສະມາຊິກຂອງອົງການລັດຖະສະພາອາຊຽນ ປະກອບສ່ວນດ້ວຍປະເທດສະມາຊິກອາຊຽນ 8 ປະເທດ ຄື ໄທ ສິງກະໂປ ຟີລິບປິນ ມາແລເຊັຍ ຫວຽດນາມ ສປປ ລາວ ກຳປູເຈຍ ແລະປະເທດຜູ້ສັງເກດການ 2 ປະເທດ ຄື ມຽນມ້າ ແລະ ບຣູໄນ ຊຶ່ງບຣູໄນບໍ່ມີລັດຖະສະພາແຕ່ໄດ້ຮັບເຊີນໃຫ້ເຂົ້າຮ່ວມກອງປະຊຸມ ກອງປະຊຸມຈັດໃຫ້ມີຂຶ້ນປີລະເທື່ອ ໂດຍປະເທດສະມາຊິກປ່ຽນກັນເປັນເຈົ້າພາບ ນອກຈາກນີ້ຍັງອາດມີລັດຖະສະພາອື່ນເຂົ້າຮ່ວມກອງປະຊຸມ ເຊັ່ນ ລັດຖະສະພາອົດສະຕຣາລີ ລັດຖະສະພາຍີ່ປຸ່ນ ລັດຖະສະພາ ສປຈີນ ລັດຖະສະພາເກາຫລີໃຕ້ ລັດຖະສະພາເອີຣົບ ລັດຖະສະພາຄານາດາ

ນອກເໜືອຈາກການເຂົ້າຮ່ວມເປັນສະມາຊິກຂອງອົງການລັດຖະສະພາສາກົນ 3 ອົງການແລ້ວ ລັດຖະສະພາໄທຍັງໄດ້ເຂົ້າຮ່ວມກອງປະຊຸມລັດຖະສະພາພາກພື້ນອາຊີແລະແປຊີຟິກ (Asia Pacific Parliamentary Forum : APPF) ດ້ວຍ ໂດຍມີການເປີດກອງປະຊຸມປີລະເທື່ອ ໂດຍຕອນນີ້ມີສະມາຊິກ 27 ປະເທດແລະປະເທດຜູ້ສັງເກດການ 1 ປະເທດ ຄື ບຣູໄນ ແຕ່ກໍ່ບໍ່ໄດ້ມີການສ້າງຕັ້ງໜ່ວຍປະຈຳຊາດໄທໃນອົງການນີ້

ນອກຈາກນີ້ ຫ້ອງວ່າການສະພາຜູ້ແທນລາດສະດອນແລະຫ້ອງວ່າການວຸດທິສະພາຍັງໄດ້ເຂົ້າເປັນສະມາຊິກຂອງສະມາຊິກສະມາຄົມຫ້ອງວ່າການລັດຖະສະພາ (Association of the Secreataries General Parliaments : ASGP) ອີກດ້ວຍ

| | |
|---|---|
| Title | ພາລະບົດແລະສິດອຳນາດຂອງວຸດທິສະພາໄທ |
| Year of Publication | ເມຖຸນ 2008 (500 ຫົວ) |
| Edition | ກຸ່ມງານພາສາຈີນແລະພາສາອື່ນ<br>ສຳນັກພາສາຕ່າງປະເທດ<br>ສຳນັກງານເລຂາທິການວຸດທິສະພາ<br>(ຫ້ອງວ່າການວຸດທິສະພາ)<br>499 ອາຄານສຸກປະພຶດ ຊັ້ນ 14<br>ຖະໜົນປະຊາຊື່ນ ຕາແສງບາງຊື່<br>ເຂດບາງຊື່ ບາງກອກ 10800<br>ໂທ +66 2 831 9409 - 10<br>ແຟັກ +66 2 831 9403<br>ເວັບໄຊ http://www.senate.go.th |
| Print by | ສຳນັກການພິມ |